ສະພາແຫ່ງຊາດ
# ຜູ້ແທນປະຊາຊົນ
PHOUTHEN PASAXON
ສຽງຂອງສະພາແຫ່ງຊາດ
ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na
17-23 ມີນາ 2025
ປີທີ 14 ສະບັບທີ 1010
ລາຍສັປະດາ

## ໂຮມຊຸມນຸມສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ




ອ່ານຕໍ່ໜ້າ 8




ແນວຄິດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການນຳເອົາການສຶກສາໄປກ່ອນກ້າວໜຶ່ງນັ້ນ ແມ່ນບໍ່ລໍຖ້າໃຫ້ເສດຖະກິດຂະຫຍາຍຕົວສາກ່ອນ ຈຶ່ງຂະຫຍາຍການສຶກສາ. ແຕ່ກົງກັນຂ້າມ ຕ້ອງຊຸກຍູ້ການສຶກສາໃຫ້ຂະຫຍາຍຕົວຢ່າງແຂງແຮງ ເພື່ອເສີມຂະຫຍາຍຄຸນປະໂຫຍດຂອງມັນ ຕໍ່ການຂະຫຍາຍເສດຖະກິດ.

(ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 10 ຂອງປະທານ ໄກສອນ ພົມວິຫານ)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມສະໄໝວິສາມັນເທື່ອທີ 2 ໄຂຂຶ້ນຢ່າງເປັນທາງການ



(ສພຊ) - ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນທີ 17 ມີນານີ້ ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິ

ອ່ານຕໍ່ໜ້າ 5




## ສູນທອນພົດ
### ປະທານສະພາແຫ່ງຊາດ ກ່າວໄຂກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX

(ສພຊ) - ໃນພິທີເປີດກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພົດໄຂກອງປະຊຸມວ່າ: ມື້ນີ້ ສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງຕົນຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທົ່ງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະສະໄໝວິສາມັນຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເຂົ້າໃນທຸກຂົງເຂດວຽກງານ ດ້ວຍຄວາມຫ້າວຫັນ ແລະ ເປັນຂະບວນການ; ພ້ອມກັນກະກຽມໃຫ້ແກ່ການສະເຫຼີມສະ

ອ່ານຕໍ່ໜ້າ 9

## ລັດຖະບານ ກຳນົດເງື່ອນໄຂ ສຳລັບຜູ້ພັດທະນາແລະລົງທຶນ ໃນນິຄົມອຸດສາຫະກຳອຳມະຕະ



(ສພຊ) - ຕອນເຊົ້າວັນທີ 20 ມີນານີ້, ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ ໄດ້ສະເໜີກ່ຽວກັບການຄົ້ນຄວ້ານະໂຍບາຍພິເສດ ເພື່ອສົ່ງເສີມ ແລະ ດຶງດູດການລົງທຶນ

ອ່ານຕໍ່ໜ້າ 8

## ການປັບປຸງລັດຖະທຳມະນູນ ປີ 2025



(ສພຊ) - ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 17 ມີນານີ້, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ລາຍງານການປັບປຸງລັດຖະທຳມະນູນປີ 2025 ເຊິ່ງທ່ານໃຫ້ຮູ້ວ່າ: ການປັບປຸງລັດຖະທຳມະນູນຄັ້ງນີ້ ເປັນການປັບປຸງຄັ້ງທີ 3 ໂດຍສຸມໃສ່ປະຕິບັດຕາມຈິດໃຈຊີ້ນຳຂອງມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ສະໄໝທີ XI (ຄັ້ງວັນທີ 28 ຕຸລາ ຫາ 6 ພະຈິກ 2024) ແນໃສ່: 1) ປັບປຸງລະບົບອຳນາດແຫ່ງລັດ ໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາແລະສ້າງສາປະເທດຊາດ, ການເຊື່ອມ

ອ່ານຕໍ່ໜ້າ 10

## ຜະລິດສິນຄ້າຢູ່ນິຄົມອຸດສາຫະກຳ ໃຫ້ເປັນຜະລິດຕະພັນລາວ (Made in Laos)



(ສພຊ) - ການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃນຕອນເຊົ້າວັນທີ 20 ມີນານີ້ ໂດຍການເປັນປະທານ

ອ່ານຕໍ່ໜ້າ 5

ສສຊ ປະກອບຄຳເຫັນ... (ໜ້າ 4)
ການກະທຳ ສຳຄັນກວ່າຄຳເວົ້າ (ໜ້າ 9)




Serbia ຜ່ານກົດໝາຍຫຼຸດຄ່າຮຽນ... (ໜ້າ 11)
ການກະທຳ... (ໜ້າ 12)

## ຊົມເຊີຍວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ (22/3/1955-22/3/2025) ຢ່າງສຸດໃຈ!

# ກອງປະຊຸມຄະນະປະຈຳສະໄໝວິສາມັນປະຈຳເດືອນມີນາ

(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນປະຈຳເດືອນມີນາ 2025 ໄດ້ດຳເນີນຂຶ້ນໃນວັນອາທິດ, ວັນທີ 16 ມີນາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການແລະຮອງເລຂາທິການສະພາແຫ່ງຊາດ, ບັນດາທ່ານການນຳຂັ້ນສູງຈາກກະຊວງອຸດສາຫະກຳ ແລະ ການຄ້າ, ຫ້ອງວ່າການສຳນັກງານນາຍົກ




ລັດຖະມົນຕີ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເປັນຕົ້ນ: ບົດລາຍງານຄວາມພ້ອມຮອບດ້ານກ່ຽວກັບການກະກຽມກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX, ບົດລາຍງານການປັບປຸງລັດຖະທຳມະນູນປີ 2025; ບົດລາຍກ່ຽວກັບການປັບປຸງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ; ບົດລາຍງານກ່ຽວກັບການຄົ້ນຄວ້ານະໂຍບາຍພິເສດໃຫ້ແກ່ຜູ້ລົງທຶນໃນນິຄົມອຸດສາຫະກຳອຳມະຕະ. ບັນດາຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ອາລິນ ສຸພົມມະປະກິດ)**




# ຕາແສງ ເປັນກົງຈັກການປົກຄອງຂັ້ນລຸ່ມສຸດຢູ່ຮາກຖານ

(ສພຊ) - ຕອນເຊົ້າວັນທີ 18 ມີນານີ້, ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ທ່ານ ປອ. ວິໄລວົງ ບຸດດາຄຳ ລັດຖະມົນຕີກະຊວງພາຍໃນ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ເຊິ່ງຜ່ານການຕີລາຄາການຈັດຕັ້ງປະຕິບັດກົດໝາຍເຫັນວ່າ: ມີບາງບັນຫາທີ່ຄ້າງຄາ ແລະ ບໍ່ສາມາດຈັດຕັ້ງປະຕິບັດໄດ້ດີເທົ່າທີ່ຄວນ ເປັນຕົ້ນແມ່ນ: 1) ເທດສະບານ ທີ່ກຳນົດໄວ້ເປັນຫົວໜ່ວຍການປົກຄອງໜຶ່ງໃນຂັ້ນເມືອງ, ມາຮອດປັດຈຸບັນ ບໍ່ທັນສາມາດຈັດຕັ້ງປະຕິບັດໄດ້; 2) ນະຄອນຂັ້ນເມືອງ ທີ່ໄດ້ສ້າງຕັ້ງຂຶ້ນ 3 ແຫ່ງ ໃນປີ 2018, ຜ່ານການຈັດຕັ້ງປະຕິບັດເຫັນວ່າຍັງບໍ່ທັນສາມາດປະຕິບັດພາລະບົດບາດຂອງຕົນໄດ້ຢ່າງເຕັມສ່ວນ ຍັງຂາດນິຕິກຳທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດເປັນຕົ້ນແມ່ນນິຕິກຳດ້ານການເງິນ, ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດ ບໍ່ໄດ້ຕ່າງຈາກເມືອງທົ່ວໄປພໍເທົ່າໃດ; 3) ອົງການປົກຄອງຂັ້ນບ້ານໃນທົ່ວປະເທດ ເຖິງແມ່ນວ່າຈະມີການຈັດຕັ້ງໃຫ້ມີ 5 ໜ່ວຍງານຕາມທີ່ກົດໝາຍກຳນົດກໍຕາມ, ແຕ່ການຈັດຕັ້ງປະຕິບັດຕົວຈິງຢູ່ບາງທ້ອງຖິ່ນແມ່ນຍັງບໍ່ສອດຄ່ອງກັບເງື່ອນໄຂຕົວຈິງຂອງທ້ອງຖິ່ນ; 4) ນອກນັ້ນ, ຍັງມີກຸ່ມບ້ານເຊິ່ງຖືກສ້າງຕັ້ງຂຶ້ນຕາມມະຕິ09/ກມສພເປັນຂອດລະຫວ່າງກາງລະຫວ່າງເມືອງກັບບ້ານ ເຮັດວຽກຄ້າຍຄືຂັ້ນການປົກຄອງ, ແຕ່ບໍ່ແມ່ນຂັ້ນຂອງການປົກຄອງ; 5) ພ້ອມດຽວ



ກັນນັ້ນ, ໃນເນື້ອໃນຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ມີບາງມາດຕາຍັງບໍ່ທັນສອດຄ່ອງກັບກົດໝາຍອື່ນທີ່ກ່ຽວຂ້ອງ.

ອີກດ້ານໜຶ່ງ, ຍັງພົບເຫັນບັນຫາຄ້າງຄາໃນຂອດຈັດຕັ້ງປະຕິບັດຕົວຈິງໃນການນຳພາ, ຄຸ້ມຄອງບໍລິຫານໃນຂັ້ນຮາກຖານ (ຂັ້ນບ້ານ) ເຖິງແມ່ນພັກ ແລະ ລັດຖະບານ ມີຄວາມພະຍາຍາມສຸມໃສ່ພັດທະນາຮາກຖານຫຼາຍເທົ່າໃດ, ແຕ່ປະສິດທິພາບຂອງວຽກງານ ກໍບໍ່ທັນໄດ້ມີຜົນສຳເລັດດີເທົ່າທີ່ຄວນ, ບັນຫາຕົ້ນຕໍທີ່ສັງເກດເຫັນແມ່ນ: ການປົກຄອງຂັ້ນລຸ່ມສຸດຕາມກົດໝາຍກຳນົດ ແມ່ນອົງການປົກຄອງບ້ານເປັນຂັ້ນການບໍລິຫານປົກຄອງ, ແຕ່ຜູ້ທີ່ເປັນຫົວໜ້າບໍລິຫານ ບໍ່ແມ່ນລັດຖະກອນທີ່ປະຕິບັດອຳນາດບໍລິຫານລັດ, ບາງບ່ອນກໍບໍ່ຮູ້ໜັງສື, ການສ້າງພະນັກງານສືບທອດຂັ້ນບ້ານບໍ່ຕໍ່ເນື່ອງ, ການເຝິກອົບຮົມໃຫ້ພະນັກງານບ້ານຍັງບໍ່ທົ່ວເຖິງ ອັນສຳຄັນແມ່ນບັນດາແນວທາງນະໂຍບາຍ, ລະບຽບກົດໝາຍທີ່ຂັ້ນເທິງວາງອອກ ອົງການປົກຄອງຂັ້ນຮາກຖານບໍ່ສາມາດຈັດຕັ້ງຜັນຂະຫຍາຍໄດ້ຢ່າງມີປະສິດທິພາບ ແລະ ບໍ່ໄດ້ຮັບຜົນດີເທົ່າທີ່ຄວນ, ຍັງຂາດຄວາມເປັນມືອາຊີບໃນການປະຕິບັດວຽກງານ, ໃນບາງເຂດ ບໍ່ມີໃຜຢາກເປັນນາຍບ້ານ ຈຳເປັນຕ້ອງໄດ້ມີການລະດົມປະຊາຊົນ ໂດຍສະເພາະເຂດຊົນນະບົດຫ່າງໄກສອກຫຼີກ ຍ້ອນກະທົບຕໍ່ການທຳມາຫາກິນ ແລະ ທຳການຜະລິດຂອງເຂົາເຈົ້າ, ການປະຕິບັດວຽກງານກໍບໍ່ເຕັມເມັດເຕັມໜ່ວຍ; ແຕ່ກົງກັນຂ້າມ, ບ້ານ ໂດຍສະເພາະໃນເຂດຕົວເມືອງ ຊໍ້າພັດຍາດກັນເປັນນາຍບ້ານ ເພື່ອຫວັງຜົນປະໂຫຍດ ແລະ ບາງບ່ອນກໍເຮັດບົດບາດເກີນ, ສວຍໃຊ້ໜ້າທີ່ພາໃຫ້ເກີດການລ່ວງລະເມີດສິດເປັນເຈົ້າຂອງປະຊາຊົນ. ສັງລວມແລ້ວການບໍລິຫານຂັ້ນຮາກຖານ ຍັງບໍ່ທັນເຂັ້ມແຂງດີເທົ່າທີ່ຄວນ, ການບໍລິຫານລັດຂັ້ນຮາກຖານຍັງມີລັກສະນະເຄິ່ງໆກາງໆ, ຊອດກະຈາ ລະຫວ່າງອົງການບໍລິຫານລັດຂັ້ນລຸ່ມສຸດ ກັບການຈັດຕັ້ງຊຸມຊົນ.

ເພື່ອໃຫ້ສອດຄ່ອງນິຕິກຳຈຳນວນໜຶ່ງທີ່ສູນກາງວາງອອກນັ້ນເປັນຕົ້ນແມ່ນມະຕິວ່າດ້ວຍສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະຮອບດ້ານໃນການນຳພາຂອງພັກສະບັບເລກທີ 05/ຄບສພ; ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຄາດຄະເນແບ່ງຄວາມຮັບຜິດຊອບຂອງຄະນະປະຈຳພັກແຕ່ລະຂັ້ນ ສະບັບເລກທີ 173/ຄລສພ; ແຈ້ງການກ່ຽວກັບການແບ່ງງານໃຫ້ສະຫາຍຮອງເລຂາຄະນະບໍລິຫານງານພັກເມືອງ-ນະຄອນ ສະບັບເລກທີ 56/ຄຈສພ; ແຈ້ງການກ່ຽວກັບທິດຊີ້ນຳກ່ຽວກັບການສ້າງຕາແສງໃນຂອບເຂດທົ່ວປະເທດ ສະບັບເລກທີ 04/ຫສພ ແລະ ຮ່າງລັດຖະທຳມະນູນສະບັບປັບປຸງ ຂອງຄະນະປັບປຸງລະດັບຊາດ. ໂດຍອີງໃສ່ທິດນຳດັ່ງກ່າວ ລັດຖະບານໄດ້ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປີ 2025 ຕື່ມເປັນຕົ້ນແມ່ນການຄົ້ນຄວ້າອົງການປົກຄອງຕາແສງເປັນກົງຈັກການປົກຄອງຂັ້ນລຸ່ມສຸດຢູ່ຮາກຖານ, ຫັນບ້ານໃຫ້ເປັນການຈັດຕັ້ງຂອງຊຸມຊົນ ພ້ອມນັ້ນ, ກໍໄດ້ຄົ້ນຄວ້າຊື່ເອີ້ນຕຳແໜ່ງບໍລິຫານ ເຊິ່ງໄດ້ລະບຸຊື່ເອີ້ນຂອງຫົວໜ້າອົງການປົກຄອງຂັ້ນແຂວງ ຈະແຈ້ງວ່າ ແມ່ນປະທານຄະນະກຳມະການປົກຄອງແຂວງ, ນະຄອນຫຼວງວຽງຈັນ; ຂັ້ນເມືອງ ແມ່ນປະທານຄະນະກຳມະການປົກຄອງເມືອງ, ນະຄອນ; ຂັ້ນຕາແສງ ແມ່ນປະທານຄະນະກຳມະການປົກຄອງຕາແສງ.

ທ່ານ ປອ. ວິໄລວົງ ບຸດດາຄຳ ໃຫ້ຮູ້ວ່າ: ພາຍຫຼັງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງປີ 2025 ຖືກຮັບຮອງ ແລະ ປະກາດໃຊ້ ຈະເປັນບ່ອນອີງອັນສຳຄັນໃຫ້ແກ່ອົງການປົກຄອງທ້ອງຖິ່ນ ໃນການປັບປຸງຂັ້ນການປົກຄອງໃຫ້ມີຄວາມສອດຄ່ອງ ແລະ ແທດເໝາະກັບສະພາບເງື່ອນໄຂຕົວຈິງໃນແຕ່ລະທ້ອງຖິ່ນ ໂດຍສະເພາະການສ້າງຕາແສງເປັນການປົກຄອງຂັ້ນລຸ່ມສຸດ ເພື່ອເອື້ອອຳນວຍໃຫ້ບ້ານເປັນຫົວໜ່ວຍບໍລິຫານຊຸມຊົນຢ່າງແທ້ຈິງ; ເປັນບ່ອນອີງໃຫ້ແກ່ບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ໃນການປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະເປັນການແບ່ງຄວາມຮັບຜິດຊອບ, ແບ່ງຂັ້ນຄຸ້ມຄອງໃຫ້ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນໃຫ້ແທດເຖິງ ທັງຮັບປະກັນບົດບາດການນຳພາຂອງພັກຢ່າງໜັກແໜ້ນ ເຮັດໃຫ້ການນຳພາຂອງພັກຢັ່ງເລິກເຖິງຫົວໜ່ວຍຮາກຖານຂອງປະເທດ; ສ້າງໃຫ້ເປັນກົງຈັກການປົກຄອງທີ່ຕິດແທດກົ້ງເກືອກລີເລືອ, ເປັນທີ່ເພິ່ງຂອງປະຊາຊົນບັນດາເຜົ່າ; ສາມາດນຳເອົາແນວທາງນະໂຍບາຍ, ການບໍລິການຂອງລັດຫຍັບເຂົ້າເຖິງປະຊາຊົນໄດ້ຢ່າງທົ່ວເຖິງ; ພ້ອມກັນນັ້ນ, ຍັງເປັນການຍົກລະດັບການປົກຄອງລັດດ້ວຍກົດໝາຍໃຫ້ໜັກແໜ້ນຍິ່ງຂຶ້ນ ຕາມຈຸດພິເສດ ແລະ ເງື່ອນໄຂຂອງ ສປປລາວ ເພື່ອສ້າງເງື່ອນໄຂໃຫ້ທ້ອງຖິ່ນນັບມື້ນັບມີຄວາມເຂັ້ມແຂງ, ມີການພັດທະນາເຊິ່ງເປັນປັດໄຈສຳຄັນຕົ້ນຕໍໃຫ້ກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ກໍຄືການສ້າງຄວາມຢູ່ດີກິນດີແຕ່ຮາກຖານຂຶ້ນມາ ເພື່ອກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ.



# ປັບປຸງວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ໃຫ້ເຂົ້າສູ່ລະບົບ ຕາມທິດກະທັດຮັດ



(ສພຊ) - ຕອນເຊົ້າວັນທີ 19 ມີນານີ້, ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີIX ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ທ່ານ ປອ. ວິໄລວົງ ບຸດດາຄຳ ລັດຖະມົນຕີກະຊວງພາຍໃນ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ເຊິ່ງຜ່ານການຈັດຕັ້ງປະຕິບັດຕົວຈິງຍັງພົບຂໍ້ຫຍຸ້ງຍາກຕ່າງໆເຊັ່ນ: ບາງພາກສ່ວນຍັງມີຄວາມເຂົ້າໃຈຄາດເຄື່ອນຕໍ່ກັບຈຸດປະສົງ, ເນື້ອໃນແລະຂັ້ນຕອນວິທີການຈັດຕັ້ງປະຕິບັດເນື້ອໃນມາດຕາຕ່າງໆຂອງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍພາໃຫ້ການປະຕິບັດວຽກງານຍັງບໍ່ທັນເປັນເອກະພາບສູງ ແລະ ຖືກຕ້ອງຕາມຈຸດປະສົງຂອງນິຕິກຳ; ການເຜີຍແຜ່ເຊື່ອມຊຶມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງບາງຄັ້ງຍັງມີຄວາມຊັກຊ້າ ແລະ ບໍ່ທົ່ວເຖິງ; ເນື້ອໃນນິຕິກຳໃຕ້ກົດໝາຍບາງສະບັບ ຍັງບໍ່ແທດເໝາະ ແລະ ບໍ່ສາມາດປະຕິບັດໄດ້ຢ່າງເຕັມສ່ວນ, ຈຳເປັນຕ້ອງໄດ້ຄົ້ນຄວ້າປັບປຸງຄືນ ເຮັດໃຫ້ແກ່ຍາວເວລາໃນການນຳໄປປະຕິບັດ ແລະ ຜັນຂະຫຍາຍ.

ອີງໃສ່ແນວທາງນະໂຍບາຍປ່ຽນແປງໃໝ່ທີ່ມີຫຼັກການ ແລະ ວຽກງານຈຸດສຸມຂອງພັກ ແລະ ລັດຖະບານ, ການຜັນຂະຫຍາຍມະຕິວ່າດ້ວຍສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ໃນການນຳພາຂອງພັກ ສະບັບເລກທີ 05/ຄບສພ, ມະຕິວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງຄະນະບໍລິຫານສູນກາງພັກ ເລກທີ 03/ຄບສພ, ຮ່າງລັດຖະທຳມະນູນ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ)ແລະນິຕິກຳອື່ນໆ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດວຽກງານຄຸ້ມຄອງລັດຖະກອນ ຂອງ ສປປ ລາວ ຮອດປີ2030 ສົມທົບກັບພຶດຕິກຳຕົວຈິງໃນການຈັດຕັ້ງປະຕິບັດບັນດານິຕິກຳກ່ຽວກັບວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ໃນໄລຍະ 10 ປີຜ່ານມາ (2015-2025) ແລະ ອີງໃສ່ຜົນການລົງປະເມີນ, ທາບທາມຄຳເຫັນຈາກບັນດາພາກສ່ວນຮັບຜິດຊອບວຽກງານຄຸ້ມຄອງລັດຖະກອນໃນຂອບເຂດທົ່ວປະເທດ ເຫັນວ່າມີຄວາມຈຳເປັນຕ້ອງໄດ້ປັບປຸງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ເພື່ອໃຫ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລັດຖະກອນ ໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່ ໂດຍສະເພາະຂອດການຈັດຕັ້ງປະຕິບັດວຽກງານຄຸ້ມຄອງພະນັກງານ-ລັດຖະກອນໃນປັດຈຸບັນ ແລະ ຕໍ່ໜ້າ, ຄະນະຮັບຜິດຊອບໄດ້ຄົ້ນຄວ້າ ແລະ ສະເໜີປັບປຸງຂອບເຂດການນຳໃຊ້ກົດໝາຍ, ອາຍຸເຂົ້າເປັນລັດຖະກອນ, ອາຍຸກະສຽນບຳນານ, ຊື່ເອີ້ນຕຳແໜ່ງບໍລິຫານ, ຂັ້ນຂອງຕຳແໜ່ງວິຊາການ, ສິດ ແລະໜ້າທີ່ຂອງອົງການຄຸ້ມຄອງພະນັກງານ-ລັດຖະກອນ ຂັ້ນສູນກາງແລະຂັ້ນຕາແສງແລະອື່ນໆ.

ທ່ານ ປອ. ວິໄລວົງ ບຸດດາຄຳ ໃຫ້ຮູ້ວ່າ: ເມື່ອຮ່າງກົດໝາຍສະບັບນີ້ຖືກຮັບຮອງແລະປະກາດໃຊ້ຢ່າງເປັນທາງການ ຈະເປັນນິຕິກຳທີ່ເປັນເຄື່ອງມືອັນສຳຄັນໃຫ້ແກ່ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນໃນການຄຸ້ມຄອງພະນັກງານ-ລັດຖະກອນ ນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຢ່າງລວມສູນແລະເປັນເອກະພາບໃນຂອບເຂດທົ່ວປະເທດ; ເປັນບ່ອນອີງໃຫ້ແກ່ບັນດາຂະແໜງການທີ່ກ່ຽວຂ້ອງນຳໄປຜັນຂະຫຍາຍ ແລະ ຄົ້ນຄວ້າອອກນິຕິກຳໃຕ້ກົດໝາຍເພື່ອຄຸ້ມຄອງພະນັກງານ-ລັດຖະກອນສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ຈຸດພິເສດແຕ່ລະຂະແໜງການ; ອົງການຈັດຕັ້ງພັກ-ລັດແຕ່ລະຂັ້ນ ມີກົນໄກບໍລິຫານ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ ທີ່ສອດຄ່ອງກັບແນວທາງປ່ຽນແປງໃໝ່ຢ່າງມີຫຼັກການຂອງພັກ, ລະບຽບກົດໝາຍຂອງລັດ, ການພັດທະນາເສດຖະກິດ-ສັງຄົມ, ທ່າອຽງຂອງຍຸກສະໄໝຂອງພາກພື້ນ ແລະສາກົນ; ວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ຈະໄດ້ຮັບການປັບປຸງເຂົ້າສູ່ລະບົບ, ມີຄວາມເປັນເອກະພາບຕາມທິດກະທັດຮັດ, ໂລ່ງລ່ຽນ, ມີປະສິດທິພາບ ແລະເຂັ້ມແຂງ ທີ່ກຳນົດໃນມະຕິວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງຄະນະບໍລິຫານສູນກາງພັກ ເລກທີ 03/ຄບສພ, ລົງວັນທີ12 ມີນາ2025.

# ເຜີຍແຜ່ ແລະ ແນະນຳວຽກໄອປາ ຄັ້ງທີ 10



(ສພຊ) - ວັນທີ 17 ມີນາຜ່ານມາທີ່ມະຫາວິທະຍາໄລແຫ່ງຊາດລາວ(ມຊ) ໄດ້ຈັດງານເຜີຍແຜ່ ແລະ ແນະນຳວຽກງານສະມັດຊາລັດຖະສະພາລະຫວ່າງຊາດອາຊຽນຫຼືໄອປາ(ASEAN Inter-Parliamentary Assembly) ຄັ້ງທີ 10 ໂດຍມີທ່ານ ຈັນທະວົງ ແສນອາມາດ ມົນຕີ ຮອງປະທານກຳມາທິການການຕ່າງປະເທດ, ທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ດາໂຕະ ຮາຈີ ອັບດຸນ ຣາມັນ ເລຂາທິການໃຫຍ່ໄອປາ, ທ່ານ ປອ. ກໍລະກັນ ພົມມະວົງ ສະມາຊິກລັດຖະສະພາໜຸ່ມຂອງສະພາແຫ່ງຊາດ, ທ່ານ ນາງ ມີນາ ສີວິໄລ ຫົວໜ້າກົມກວດກາ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ທ່ານ ພົມມະຈັນ ອານຸສອນ ຕົວແທນຈາກໄອປາຊຸດທີ 4; ເຂົ້າຮ່ວມມີຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດລາວ, ຄູ-ອາຈານ, ນັກສຶກສາຈາກແຕ່ລະຄະນະພາຍໃນ ມຊ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ.

ງານຄັ້ງນີ້ ຈັດຂຶ້ນເພື່ອເປັນຂໍ້ລິເລີ່ມທີ່ໄດ້ຮັບການຂັບເຄື່ອນໂດຍຊາວໜຸ່ມແລະມີຈຸດປະສົງເພື່ອສົ່ງເສີມໃຫ້ຊາວໜຸ່ມ ສປປລາວ ມີສ່ວນຮ່ວມເຂົ້າໃນການເຄື່ອນໄຫວຂອງພາກພື້ນຢ່າງຫ້າວຫັນຂຶ້ນຕື່ມ, ເຫັນໄດ້ເຖິງຄຸນຄ່າຂອງການທູດລັດຖະສະພາ ແລະ ຮັບຮູ້ສຽງຂອງຕົນໃນການສ້າງອະນາຄົດທີ່ດີກວ່າ; ເພື່ອສົ່ງເສີມການພົວພັນ ແລະ ຮ່ວມມື ອັນມີຄວາມໝາຍສຳຄັນກັບບັນດາຜູ້ນຳໜຸ່ມອາຊຽນທີ່ມີຊີວິດຊີວາ. ເປັນເວທີຂອງຊາວໜຸ່ມໃນການແລກປ່ຽນຄວາມຄິດ, ສະແດງເຈດຈຳນົງ ແລະ ວິໄສທັດສຳລັບອາຊຽນ.

ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ມີຄຳເຫັນກ່າວເປີດພິທີວ່າ: ງານເຜີຍແຜ່ ແລະ ແນະນຳວຽກງານໄອປາຄັ້ງນີ້ເປັນໂອກາດອັນດີທີ່ບັນດາຊາວໜຸ່ມລາວ ຈະໄດ້ປຶກສາຫາລືຮ່ວມກັບຜູ້ກຳນົດນະໂຍບາຍ, ສະມາຊິກລັດຖະສະພາ ແລະຕົວແທນຂອງຊາວໜຸ່ມໃນພາກພື້ນ; ສະເໜີໃຫ້ພ້ອມກັນຮັບຟັງ, ຕັ້ງຄຳຖາມ ແລະ ແລກປ່ຽນຄຳເຫັນຂອງຕົນ ພ້ອມທັງນຳໃຊ້ງານຄັ້ງນີ້ໃຫ້ເກີດຜົນປະໂຫຍດສູງສຸດ, ພ້ອມກັນຮຽນຮູ້ກ່ຽວກັບໄອປາ ແລະ ຕັ້ງໜ້າເຂົ້າຮ່ວມເວທີການສົນທະນາດ້ວຍຄວາມເອົາໃຈໃສ່ ເນື່ອງຈາກວ່າທັດສະນະ ແລະ ຄວາມຄິດຂອງຊາວໜຸ່ມ ມີຄວາມສຳຄັນ ແລະ ຈະເປັນກຳລັງແຮງໃນການສ້າງການປ່ຽນແປງຢ່າງແທ້ຈິງ. ງານຄັ້ງນີ້ ເປັນຈຸດເລີ່ມຕົ້ນໃນການເດີນທາງຂອງພວກເຮົາໃນຖານະທີ່ເປັນຜູ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນປະຊາຄົມອາຊຽນ ແນໃສ່ສືບຕໍ່ຈະເລີນເຕີບໂຕໄປຄຽງຄູ່ກັບການເຮັດວຽກຮ່ວມກັນເພື່ອບັນລຸອາຊຽນເອກະພາບ ແລະ ເຂັ້ມແຂງ; ພວກເຮົາເຫັນໄດ້ ຄວາມສຳຄັນໃນການຢ້ຳຄືນຄວາມໝາຍໝັ້ນຂອງຕົນ ໃນການຮ່ວມມືກັນ, ຄວາມກວມລວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມ ໄປຄຽງຄູ່ກັບຄວາມກ້າວໜ້າຂອງພວກເຮົາ ເພື່ອຮັບປະກັນວ່າສຽງຂອງຊາວໜຸ່ມ ຕ້ອງສາມາດເຂົ້າເຖິງໄດ້ ນອກຈາກບັນດາເວທີທີ່ກ່າວມານັ້ນລວມທັງກົດໝາຍ ແລະ ນະໂຍບາຍໃນທຸກຂົງເຂດ.

ທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ມີຄຳເຫັນວ່າ: ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ເປັນອົງການລັດຖະສະພາໜຶ່ງດຽວຂອງອາຊຽນ; ເປັນບ່ອນເຕົ້າໂຮມສະມາຊິກລັດຖະສະພາໃນທົ່ວພາກພື້ນ ເພື່ອສົ່ງເສີມການຮ່ວມມື, ແກ້ໄຂບັນດາສິ່ງທ້າທາຍຮ່ວມກັນ ແລະ ເສີມຂະຫຍາຍຂໍ້ລິເລີ່ມດ້ານນິຕິບັນຍັດເພື່ອກ້າວໄປສູ່ບັນດາກາລະໂອກາດໃນພາກພື້ນ. ໄລຍະຜ່ານມາ, ໄອປາ ໄດ້ດຳເນີນບາດກ້າວອັນສຳຄັນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການມີສ່ວນຮ່ວມຂອງຊາວໜຸ່ມ; ໃນປີ2020 ໄດ້ສ້າງຕັ້ງກອງປະຊຸມຄະນະສະມາຊິກລັດຖະສະພາໜຸ່ມໄອປາ ເພື່ອຮັບປະກັນວ່າທັດສະນະຂອງຊາວໜຸ່ມບໍ່ພຽງແຕ່ຕ້ອງໄດ້ຮັບການຮັບຟັງເທົ່ານັ້ນ, ແຕ່ຍັງຕ້ອງເຊື່ອມສານເຂົ້າໃນຂັ້ນຕອນການຕົກລົງບັນຫາຕ່າງໆທີ່ກຳນົດອະນາຄົດຂອງພາກພື້ນດ້ວຍຄວາມເອົາໃຈໃສ່ອີກດ້ວຍ.

ງານເຜີຍແຜ່ ແລະ ແນະນຳວຽກງານໄອປາຄັ້ງນີ້ເປັນເທື່ອທຳອິດທີ່ຈັດຂຶ້ນຢູ່ ສປປລາວ ເຊິ່ງໄດ້ຮັບຟັງການສະເໜີກ່ຽວກັບພາລະບົດບາດ, ໜ້າທີ່ ແລະ ກິດຈະກຳຕ່າງໆຂອງໄອປາ ແລະ ກອງເລຂາໄອປາ ໃນນາມເປັນພຽງອົງການດຽວຂອງລັດຖະສະພາທີ່ຮ່ວມມືກັບອາຊຽນ; ພາລະບົດບາດ, ສິດ, ໜ້າທີ່ ແລະການມີສ່ວນຮ່ວມຂອງສະພາແຫ່ງຊາດລາວ ຕໍ່ພາກພື້ນອາຊີຕາເວັນອອກສຽງໃຕ້ ແລະ ໃນນາມເປັນສະມາຊິກໄອປາ. ຫຼັງຈາກນັ້ນ, ກໍເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນພ້ອມທັງກິດຈະກຳຖາມ-ຕອບ ເພື່ອທົບທວນຄວາມເຂົ້າໃຈຂອງຊາວໜຸ່ມ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ມອບ-ຮັບປະຕິທິນ ແລະ ປຶ້ມບັນທຶກ



(ສພຊ) - ວັນທີ 20 ມີນານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບປະຕິທິນ ແລະ ປຶ້ມບັນທຶກ ຈຳນວນ 200 ຊຸດ ມູນຄ່າ 38 ລ້ານກີບ; ຕາງໜ້າກ່າວມອບໂດຍທ່ານ ປອ. ນາງ ຈັນໂສດາ ພອນທິບ ຮອງປະທານສູນກາງສະຫະພັນແມ່ຍິງລາວ, ຮອງປະທານຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ15 ແຂວງຈຳປາສັກ ແລະ ຕາງໜ້າ ສພຊ ກ່າວຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ໂດຍມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ປອ. ອາຄົມ ປຣະເສີດ ໄດ້ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຄັ້ງນີ້ແລະມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ເພື່ອຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳ.

**(ນາງ ອາລິນ ສຸພົມມະປະດິດ)**

# ສສຊ ປະກອບຄຳເຫັນຕໍ່ຮ່າງລັດຖະທຳມະນູນ ສະບັບປີ 2025

(ສພຊ) - ວາລະທຳອິດຂອງການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 17 ມີນາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ພາຍຫຼັງທີ່ໄດ້ຮັບຟັງບົດລາຍງານການປັບປຸງລັດຖະທຳມະນູນປີ 2025 ຈາກທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ; ຈາກນັ້ນ, ປະທານກອງປະຊຸມ ໄດ້ມີຄຳເຫັນເຈາະຈີ້ມທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ໂດຍສະເໜີໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ມີຄຳເຫັນຢ່າງມີຈຸດສຸມຕໍ່ບາງມາດຕາທີ່ເພີ່ມໃໝ່ ແລະ ປັບປຸງ, ບັນດາທ່ານ ສສຊ ກໍໄດ້ຜັດປ່ຽນກັນຂຶ້ນປະກອບຄຳເຫັນຢ່າງມີຈຸດສຸມ ແລະ ສະເໜີໃຫ້ພິຈາລະນາການໃຊ້ຄຳສັບໃນບາງມາດຕາ ເປັນຕົ້ນ:



**ທ່ານ ນາງ ສົມພຽນ ວົງໄຊ ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ** ໄດ້ປະກອບຄຳເຫັນໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຕໍ່ຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ວ່າ:

ມາດຕາ 57 ຂໍ້ 4 "ປະທານສານປະຊາຊົນພາກ ຖືກແຕ່ງຕັ້ງຍົກຍ້າຍຫຼືປົດຕຳແໜ່ງໂດຍຄະນະປະຈຳສະພາແຫ່ງຊາດ" ຕໍ່ໄປການຕິດຕາມກວດກາການປະຕິບັດກົດໝາຍຂອງສານປະຊາຊົນພາກ ຈະແມ່ນພາກສ່ວນໃດເປັນຜູ້ຕິດຕາມກວດກາ ລະຫວ່າງສະພາແຫ່ງຊາດ ກັບ ສະພາທ້ອງຖິ່ນບ່ອນສານພາກຕັ້ງຢູ່, ອີກດ້ານໜຶ່ງ ກົດໝາຍວ່າດ້ວຍສານປະຊາຊົນ ກຳນົດໃຫ້ສານປະຊາຊົນພາກເປັນສານທ້ອງຖິ່ນ; ຫົວໜ້າອົງການໄອຍະການປະຊາຊົນພາກ ຈະແມ່ນພາກສ່ວນໃດຮັບຮອງ.

ມາດຕາ 89 ບໍ່ເຫັນດີຕື່ມຄຳວ່າ "ພິພາກສາຄະດີ" ໃສ່ວັກທີໜຶ່ງແຖວທີສອງ ເນື່ອງຈາກຄຳວ່າ "ພິຈາລະນາຕັດສີນຄະດີ" ແມ່ນຄຳສັບລວມທີ່ໃຊ້ທົ່ວໄປໃຊ້ກັບສານທຸກຂັ້ນ ບໍ່ວ່າຈະເປັນຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ; ຢູ່ວັກທີສອງກໍຂຽນວ່າ "ສານປະຊາຊົນຕັດສີນຄະດີເປັນຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ" ບໍ່ໄດ້ຂຽນວ່າ "ຕັດສີນ ແລະ ພິພາກສາຄະດີ" ແຕ່ຢ່າງໃດ. ນອກຈາກນີ້ມາດຕາອື່ນເຊັ່ນ: ມາດຕາ 91, 97 ກໍບໍ່ໄດ້ກຳນົດມີຄຳພິພາກສາ ແຕ່ຢ່າງໃດ.

ມາດຕາ 77 ວັກສອງ ສະເໜີພິຈາລະນາຄືນຄຳວ່າ "ອາດ" ເຊິ່ງເປັນຄຳທີ່ບໍ່ຈະແຈ້ງ, ໃນຖານະທີ່ເປັນລັດຖະທຳມະນູນ ເປັນກົດໝາຍສູງສຸດ ຕ້ອງກຳນົດໃຫ້ຈະແຈ້ງ; ອີງຕາມຂັ້ນການປົກຄອງທ້ອງຖິ່ນມີ 3 ຂັ້ນກໍຈິງ, ແຕ່ສະເໜີໃຫ້ສັບຊ້ອນໃຫ້ມີຊື່ຂອງສະພາປະຊາຊົນນະຄອນຫຼວງໃສ່ລັດຖະທຳມະນູນສະບັບນີ້ຕື່ມ.

ອີງຕາມຄຳຖາມເຈາະຈີ້ມໃນຂໍ້ທີ 13 ກ່ຽວກັບການກຳນົດຈັດລຽງລະຫວ່າງແຂວງແລະນະຄອນຫຼວງ ຄວນເອົາອັນໃດຂຶ້ນກ່ອນນັ້ນ, ໂດຍອີງເຫດຜົນຍ້ອນນະຄອນຫຼວງເປັນໃຈກາງທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ປກຊ-ປກສ ແລະ ການຕ່າງປະເທດ, ເປັນໝາກຫົວໃຈ ເປັນໃບໜ້າຂອງປະເທດ ມີອັນພິເສດຫຼາຍດ້ານ; ສະນັ້ນ, ຈຶ່ງເຫັນຄວນໃຫ້ເອົາຊື່ຂອງນະຄອນຫຼວງຂຶ້ນກ່ອນແຂວງ ຄືກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນກໍໄດ້ປັບປຸງ ແລະເຂດເລືອກຕັ້ງກໍກຳນົດເອົານະຄອນຫຼວງເປັນເຂດທີໜຶ່ງ. ສ່ວນກົດໝາຍໃດທີ່ບໍ່ສອດຄ່ອງ ກໍຄ່ອຍໆປັບປຸງໄປຕາມໄລຍະເວລາຂອງມັນ; ດັ່ງນັ້ນ, ຈຶ່ງສະເໜີພິຈາລະນາດ້ວຍ.

ໝວດທີ IX ອົງການປົກຄອງທ້ອງຖິ່ນ: ສປປລາວແບ່ງການປົກຄອງທ້ອງຖິ່ນອອກເປັນ 3 ຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ ນັ້ນແມ່ນເຫັນດີ; ແຕ່ສະເໜີໃຫ້ເອົາຊື່ຂອງນະຄອນຫຼວງໃສ່ນຳ, ອາດຈະເອົາຕື່ມໃສ່ທາງໜ້າຂອງແຂວງແລ້ວຂີດຕໍ່ ຫຼື ຈຸດ ຈະເໝາະສົມບໍ່? ຕົວຢ່າງ: ຂັ້ນນະຄອນຫຼວງ-ແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ.

ໃນລັດຖະທຳມະນູນສັງເກດເຫັນວ່າບໍ່ຄ່ອຍມີຊື່ນະຄອນຫຼວງ ນອກຈາກມາດຕາ 119 ທີ່ກຳນົດວ່າ ນະຄອນຫຼວງຂອງ ສປປລາວ ແມ່ນນະຄອນຫຼວງວຽງຈັນ.




**ທ່ານ ຄຳດີ ວົງລ້ອມ ສສຊ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ** ມີຄຳເຫັນວ່າ:

1. ມາດຕາ 17: ຫຍໍ້ໜ້າທີໜຶ່ງ ຂຽນວ່າ: ລັດປົກປ້ອງສິດກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊີ້ຂາດ) ສະເໜີຕັດກຳມະສິດ ແລະ ເອົາວົງເລັບອອກ; ໝາຍຄວາມວ່າ ທີ່ດິນໃຫ້ເປັນກຳມະສິດຂອງວົງຄະນາຍາດແຫ່ງຊາດ ເຊິ່ງລັດເປັນຕົວແທນ ແລະ ຄຸ້ມຄອງລວມສູນເປັນເອກະພາບຕາມກົດໝາຍເທົ່ານັ້ນ, ບໍ່ໃຫ້ເປັນກຳມະສິດຂອງບຸກຄົນໃດໜຶ່ງເດັດຂາດ ໃຫ້ມີພຽງສິດນຳໃຊ້ເທົ່ານັ້ນ. ເຫດຜົນ: 1) ເປັນຊ່ອງວ່າງໃຫ້ມີການເຂົ້າໃຈວ່າ: ທີ່ດິນທີ່ໄດ້ອອກທະບຽນນຳໃຊ້ແມ່ນມີກຳມະສິດຂາດຕົວຂອງຕົນເອງ ຈຶ່ງມີສິດຊື້-ຂາຍຊະຊາຍ, ມອບໂອນ, ຈັບຈອງໄວ້ຢ່າງຫຼວງຫຼາຍ ແລະ ກົດໜ່ວງຖ່ວງດຶງເວລາຖືກໂຄງການພັດທະນາ; 2) ອີງໃສ່ກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງປີ 2019 ມາດຕາ 3 ກຳມະສິດກ່ຽວກັບທີ່ດິນ ຂຽນວ່າ: ທີ່ດິນແຫ່ງ ສປປລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນເຈົ້າກຳມະສິດດັ່ງກ່າວ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມີການຈັດສັນ, ວາງແຜນການນຳໃຊ້ ແລະ ພັດທະນາທີ່ດິນ; ລັດມອບສິດໃຫ້ນຳໃຊ້ທີ່ດິນໃຫ້ພົນລະເມືອງລາວ, ລວມທັງນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງທີ່ເປັນພົນລະເມືອງລາວ ນຳໃຊ້ຢ່າງຍາວນານ ແລະ ໝັ້ນຄົງ.

2. ມາດຕາ 53 ແຖວທີສາມຕົກລົງບັນຫາສຳຄັນພື້ນຖານຂອງຊາດ ສະເໜີຕັດຄຳວ່າພື້ນຖານອອກ.

3. ຕາມຄຳຖາມເຈາະຈີ້ມຂອງປະທານ ຂໍ້ທີ 13: ຈະເອົາແຂວງຂຶ້ນກ່ອນ ຫຼື ເອົານະຄອນຫຼວງຂຶ້ນກ່ອນ? ເຫັນດີເອົາແຂວງຂຶ້ນກ່ອນ ເພາະວ່າມາດຕາທີ 87 ຫຍໍ້ໜ້າທີສາມ ຂຽນວ່າ: ອົງການປົກຄອງທ້ອງຖິ່ນ ປະກອບດ້ວຍຄະນະກຳມະການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ (ບໍ່ມີຂັ້ນນະຄອນຫຼວງ) ແລະ ກົດໝາຍວ່າດ້ວຍອົງການປົກຄອງທ້ອງຖິ່ນ ກໍມີພຽງແຕ່ສາມຂັ້ນ ບໍ່ໄດ້ລະບຸຂັ້ນນະຄອນຫຼວງ

**ທ່ານ ເລື່ອນວິໄລ ຈັນທະລາພັນ ສສຊ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ**



ໄດ້ກ່າວວ່າ: ມາດຕາ 78 ໃນຂໍ້ທີ 1 ພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ການດັດແກ້ງົບປະມານແຫ່ງລັດຂອງທ້ອງຖິ່ນ; ເພື່ອໃຫ້ສອດຄ່ອງກັບໝວດທີ IX ອົງການປົກຄອງທ້ອງຖິ່ນ ມາດຕາ 88 ຂໍ້ 2 ການສ້າງແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ... ຖ້າວ່າຂຽນເນື້ອໃນໃນມາດຕາແນວໃດ ໃນຂໍ້ 1 ຂອງມາດຕາ 78 ກໍຄວນປັບປຸງໃຫ້ສົມບູນ ແລະ ສອດຄ່ອງກັນເປັນຕົ້ນແຜນຍຸດທະສາດຂອງທ້ອງຖິ່ນ ກໍມີຄືກັບຂັ້ນລັດຖະບານກຳນົດວິໄສທັດ.

ມາດຕາ 86 ໃນວັກທີສອງຂຽນວ່າ: ສຳລັບບ້ານແມ່ນການຈັດຕັ້ງຊຸມຊົນ ໂດຍມີການເລືອກຕັ້ງຕາມກົດໝາຍ; ຄຳວ່າ "ໂດຍມີການເລືອກຕັ້ງຕາມກົດໝາຍ" ເຫັນຄວນເອົາອອກ, ຖ້າຈະເອົາໄວ້ ກໍຂຽນໃຫ້ຈະແຈ້ງຕື່ມວ່າ: ປະທານຄະນະກຳມະການຂອງບ້ານ ໄດ້ມາຈາກການເລືອກຕັ້ງຕາມກົດໝາຍ.

ມາດຕາ 19 ຢູ່ວັກທີສອງທີ່ຄະນະຮັບຜິດຊອບໄດ້ມີການປັບປຸງຄຳວ່າ ປົກປັກຮັກສາສິ່ງແວດລ້ອມ, ຍ້າຍສິ່ງແວດລ້ອມໄປຕໍ່ໃສ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນັ້ນເຫັນຄວນຮັກສາໄວ້ຄືເກົ່າ ເພື່ອໃຫ້ໄປຕາມໂລຊິກຂອງມັນແລະເອກະສານອື່ນຂອງພັກຂອງລັດ ແລະ ກົດໝາຍ ກໍໄດ້ຂຽນໄວ້ລັກສະນະຄືແນວນີ້, ເຫັນດີຂຽນວ່າທຸກອົງການຈັດຕັ້ງ ແລະພົນລະເມືອງທຸກຄົນ ຕ້ອງປົກປັກຮັກສາສິ່ງແວດລ້ອມ.

ມາດຕາ 33 ຂໍເພີ່ມຄຳສັບເຂົ້າໃສ່ຕື່ມໃນວັກທີໜຶ່ງແຖວສຸດທ້າຍ ທີ່ຂຽນວ່າ: ຕ້ານ, ສະກັດກັ້ນ ແລະ ແກ້ໄຂໄພພິບັດ; ສະເໜີຂຽນເພີ່ມເຂົ້າ "ເຂົ້າຮ່ວມຕ້ານ, ສະກັດກັ້ນ ແລະ ແກ້ໄຂໄພພິບັດ".

ມາດຕາ 34 ເນື້ອໃນທີ່ຄະນະຮັບຜິດຊອບສະເໜີຕັດອອກໃນວັກທີສອງແຖວສຸດທ້າຍທີ່ຂຽນວ່າ "ໃນການສ້າງສາແລະພັດທະນາປະເທດຊາດ" ເຫັນຄວນຮັກສາໄວ້ຄືເກົ່າເພາະພວກເຮົາກໍເຄີຍເວົ້າ ແລະ ນຳໃຊ້ຜ່ານມາແລ້ວ.



**ທ່ານ ໄຊຍະເດດ ຜຸຍຍະວົງ ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ** ໄດ້ປະກອບຄຳເຫັນຕໍ່ຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 17 ມີນາຜ່ານມາ ເຊິ່ງທ່ານໄດ້ສະເໜີປັບປຸງເນື້ອໃນຂໍ້ 3 ຂອງມາດຕາ 54 ໃຫ້ມີຄວາມຮັດກຸມຂຶ້ນຕື່ມ ເພື່ອໃຫ້ສະພາແຫ່ງຊາດ ມີສ່ວນຮ່ວມໃນການກຳນົດນະໂຍບາຍມະຫາພາກ ຕິດພັນກັບວຽກງານເສດຖະກິດ ເປັນຕົ້ນນະໂຍບາຍເງິນຕາ ໃຫ້ມີຄວາມຮັດກຸມຂຶ້ນຕື່ມ ໂດຍສະເໜີຕັດຄຳວ່າ "ພື້ນຖານ" ອອກ ໃຫ້ເຫຼືອພຽງຄຳວ່າ ພິຈາລະນາ, ຮັບຮອງເອົານະໂຍບາຍດ້ານການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ ທັງນີ້ ກໍເພື່ອໃຫ້ໄປລວງດຽວກັບແນວທາງໄລຍະໃໝ່ຂອງພັກ ທີ່ກຳລັງຍົກສູງບົດບາດຂອງສະພາແຫ່ງຊາດໃຫ້ສູງຂຶ້ນ.

ໃຫ້ຄະນະກຳມາທິການເສດຖະກິດຂອງສະພາແຫ່ງຊາດ ໄດ້ເຂົ້າມາມີສ່ວນຮ່ວມໃນການຄົ້ນຄວ້າຜົນກະທົບຈາກການດຳເນີນນະໂຍບາຍເງິນຕາ.

ພວກເຮົາຈະເຮັດແນວໃດເພື່ອໃຫ້ອັດຕາດອກເບ້ຍຂອງທະນາຄານໃນ ສປປລາວ ຕ່ຳລົງແນໃສ່ເອື້ອອຳນວຍແກ່ການດຳເນີນທຸລະກິດຕາມທິດການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ຕາມມະຕິ 04/ກມສພ.



**ທ່ານ ສີເຮັງ ທອນສົມບັດ ສສຊ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ** ໄດ້ມີຄຳເຫັນໃນວາລະການປະກອບຄຳເຫັນຕໍ່ຮ່າງລັດຖະທຳມະນູນສະບັບປັບ ປຸງປີ 2025 ໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 17 ມີນາຜ່ານມາວ່າ:

ມາດຕາ 13 ສ້າງຕັ້ງຂຶ້ນບົນເປັນພື້ນຖານການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ໂດຍການສົ່ງເສີມເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ. ເຫດຜົນ: ຍ້ອນວ່າກົມການເມືອງສູນກາງພັກ ໄດ້ມີມະຕິເລກທີ 04/ກມສພ, ລົງວັນທີ 11 ເມສາ 2024.

ມາດຕາ 54 ຂໍ້ 12-13 ກົງຈັກສະພາແຫ່ງຊາດແລະກົງຈັກຂອງລັດຖະບານເພີ່ມຄຳວ່າ "ເຂົ້າຮ່ວມແຕ່ຫົວທີ"

ພາຍຫຼັງທີ່ມີມະຕິ 05 ແລະ 173, ແຕ່ບໍ່ທັນມີມະຕິ ແລະ ນິຕິກຳທີ່ເວົ້າເຖິງກົງຈັກຂອງສະພາແຫ່ງຊາດ; ເລຂາພັກແຂວງເປັນປະທານຄະນະສສຊ, ປະທານສະພາປະຊາຊົນແຂວງ ແຕ່ບໍ່ທັນມີມະຕິວ່າຈະເອົາເປົ້າໝາຍໃດມາເປັນຮອງປະທານຜູ້ປະຈຳການ, ຂັ້ນແຂວງແລະເມືອງ.



**ທ່ານ ແດງ ປະທຸມທອງ ສສຊປະຈຳເຂດເລືອກຕັ້ງທີ18**

ອ່ານຕໍ່ໜ້າ 5

# ຕິດຕາມກວດກາການປະຕິບັດຕາມມະຕິ ສພຂ ຢູ່ເມືອງພີນ ແລະ ເມືອງເຊໂປນ



(ສພຂ) - ເພື່ອຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃຫ້ໄດ້ຮັບປະສິດທິຜົນ ແລະ ສຳເລັດຕາມລະດັບຄາດໝາຍ, ພ້ອມທັງເກັບກຳຂໍ້ມູນລາຍງານຕໍ່ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ແລະ ກະກຽມປະກອບຄຳເຫັນຕໍ່ບົດລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ; ວັນທີ 5-8 ມີນາຜ່ານມາ, ທ່ານ ຄຳຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດແລະແຜນການລົງທຶນຂອງລັດ ຕາມມະຕິສະພາປະຊາຊົນແຂວງຮັບຮອງເອົາໃນໄລຍະຜ່ານມາຢູ່ເມືອງພີນແລະເມືອງເຊໂປນ, ໃຫ້ການຕ້ອນຮັບໂດຍທ່ານເຈົ້າເມືອງ, ບັນດາຄະນະນຳ ແລະ ຫົວໜ້າຫ້ອງການອ້ອມຂ້າງເມືອງ, ການນຳຂອງແຕ່ລະບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ.

ການເຄື່ອນໄຫວໃນແຕ່ລະຈຸດ ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດການດຳເນີນໂຄງການໃນໄລຍະຜ່ານມາ, ໜ້າວຽກປັດຈຸບັນ ແລະ ທິດທາງແຜນການໃນຕໍ່ໜ້າ ພ້ອມທັງສົນທະນາແລກປ່ຽນບາງບັນຫາທີ່ມີຄວາມສົນໃຈ ໂດຍສະເພາະເລື່ອງທີ່ດິນ, ການມີສ່ວນຮ່ວມໃນການພັດທະນາຊຸມຊົນ ແລະ ສິ່ງແວດລ້ອມເພື່ອຊອກໃຫ້ໄດ້ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກແລະຂໍ້ຄົງຄ້າງທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂ, ຮັບປະກັນໃຫ້ໂຄງການດຳເນີນໄປດ້ວຍຄວາມຖືກຕ້ອງຕາມຂັ້ນຕອນ, ຕາມການອະນຸຍາດຂອງລັດຖະບານ ບົນພື້ນຖານລະບຽບກົດໝາຍ, ຮັກສາສິດຜົນປະໂຫຍດພາກລັດ, ໂຄງການ ແລະ ປະຊາຊົນ ໃຫ້ສົມເຫດສົມຜົນ. ພ້ອມດຽວກັນນັ້ນ, ຄະນະຍັງໄດ້ ເຄື່ອນໄຫວຢ້ຽມຢາມ ແລະ ສະແດງຄວາມຊົມເຊີຍຕໍ່ບັນດາບໍລິສັດ ທີ່ໄດ້ເອົາໃຈໃສ່ແກ້ໄຂບັນດາຜົນກະທົບຕ່າງໆ ໂດຍສະເພາະຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ; ຄຽງຄູ່ກັນນີ້ ກໍສະເໜີໃຫ້ບໍລິສັດເອົາໃຈໃສ່ ຕິດຕາມຊ່ວຍເຫຼືອພໍ່ແມ່ປະຊາຊົນເຂດພັດທະນາໂຄງການ ໂດຍສົ່ງເສີມດ້ານການຜະລິດກະສິກຳ, ພັດທະນາປັບ ປຸງພື້ນຖານໂຄງລ່າງທີ່ເປັນທ່າແຮງຂອງທ້ອງຖິ່ນແລະອາຊີບອື່ນໆເຮັດໃຫ້ປະຊາຊົນມີອາຊີບທີ່ໝັ້ນຄົງ, ມີລາຍໄດ້ ແລະ ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ ພ້ອມກັນນັ້ນ, ກໍຊ່ວຍເປັນທ່າແຮງໃນການພັດທະນາ ທ້ອງຖິ່ນໃຫ້ດີຂຶ້ນເປັນກ້າວໆ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ປ່າໄມ້ແລະເຂດນ້ຳແດນດິນ ພ້ອມທັງ ຟື້ນຟູປ່າ ແລະ ປູກປ່າທົດແທນຄືນ.

ຈາກນັ້ນ, ກໍໄດ້ລົງພົບປະປະຊາຊົນທີ່ຖືກຜົນກະທົບຈາກໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ເຫຼັກ ໃນເນື້ອ ທີ່ 400 ເຮັກຕາຢູ່ເຂດບ້ານພະລອງເຊິ່ງມີ 319 ຫຼັງຄາເຮືອນ, ພົນລະເມືອງທັງໝົດ 1,807 ຄົນ ຍິງ 726 ຄົນ ໂດຍໄດ້ຮັບຟັງການລາຍງານຈາກນາຍບ້ານ ແລະ ພໍ່ແມ່ປະຊາຊົນ ກ່ຽວກັບບັນຫາທີ່ໄດ້ຮັບຈາກໂຄງການຂຸດຄົ້ນແຮ່ເຫຼັກ ເປັນຕົ້ນ: ສະເໜີຊ່ວຍແກ້ໄຂມົນລະພິດທາງອາກາດ (ຂີ້ຝຸ່ນທີ່ເກີດຈາກການຂົນສົ່ງຫີນຂອງລົດບັນທຸກ), ການຂາດເຂີນນ້ຳໃຊ້ ເນື່ອງຈາກການຂຸດດິນຖົມແລວນ້ຳທຳມະຊາດ, ປັບສະພາບດິນທີ່ຖືກຂຸດຄົ້ນກັບມາເປັນສະ ພາບເກົ່າ ໃຫ້ສາມາດປູກຝັງໄດ້; ພາຍຫຼັງທີ່ໄດ້ພົບປະປະຊາຊົນສຳເລັດແລ້ວກໍໄດ້ພົບປະບໍລິສັດຂຸດຄົ້ນແຮ່ເຫຼັກ ເພື່ອຫາທິດທາງແກ້ໄຂບັນດາຂໍ້ສະເໜີ ພ້ອມທັງລົງກວດກາພາກສະໜາມຕົວຈິງອີກດ້ວຍ.

## ສສຊ...

(ຕໍ່ຈາກໜ້າ 4)

**ແຂວງໄຊສົມບູນ** ໄດ້ປະກອບຄຳເຫັນຕໍ່ຮ່າງລັດຖະທຳມະນູນປີ 2025 ວ່າ:

1. ຄຳນຳ ໃນແຖວສຸດທ້າຍທີ່ຂຽນວ່າ: ເຈົ້າຟ້າງຸ່ມໄດ້ນຳພາປະຊາຊົນເຮົາກໍ່ຕັ້ງ ແລະ ສ້າງປະເທດລາວລ້ານຊ້າງໃຫ້ເປັນເອກະພາບ ແລະ ຈະເລີນຮຸ່ງເຮືອງ. ເຫັນວ່າຄຳສັບ ກໍ່ຕັ້ງ ແລະ ສ້າງ ເປັນຄຳສັບທີ່ໃຫ້ຄວາມໝາຍຄ້າຍຄືກັນສ້າງຕັ້ງຂຶ້ນ, ເຮັດໃຫ້ມີຂຶ້ນ; ເນື່ອງຈາກວ່າໃນປະຫວັດສາດ ເຈົ້າຟ້າງຸ່ມໄດ້ນຳພາທ້ອນໂຮມເອົາຫົວເມືອງນ້ອຍ ແລະ ໃຫຍ່ ໃຫ້ເປັນເອກະພາບ ແລະ ປະກາດສ້າງເປັນປະເທດລາວລ້ານຊ້າງ, ຈຶ່ງສະເໜີພິຈາລະນາໃຊ້ຄຳວ່າ "ທ້ອນໂຮມ" ປ່ຽນແທນ"ກໍ່ຕັ້ງ"ເພື່ອໃຫ້ເໝາະສົມ.

2. ມາດຕາ 77 ວັກທີສອງ ທີ່ຂຽນວ່າ: ສະພາປະຊາຊົນເມືອງແລະຂັ້ນຕາແສງອາດສ້າງຕັ້ງຂຶ້ນຕາມການຕົກລົງຂອງສະພາແຫ່ງຊາດ. ເຫັນວ່າຍັງບໍ່ທັນແຈ້ງຈະແມ່ນສະພາແຫ່ງຊາດ ຫຼື ສະພາທ້ອງຖິ່ນ ເປັນຜູ້ອອກຂໍ້ຕົກລົງແຕ່ງຕັ້ງ, ສະພາແຫ່ງຊາດຈະບໍ່ແຕ່ງຕັ້ງສະພາປະຊາຊົນເມືອງ ແລະ ຕາແສງ; ການໃຊ້ຄຳສັບ "ອາດ" ກໍບໍ່ທັນຈະແຈ້ງເທື່ອ.

ດັ່ງນັ້ນ, ຈຶ່ງສະເໜີຄະນະກຳມະການລະດັບຊາດ ໄດ້ພິຈາລະນາ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ; ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ແລະ ແຂກຖືກເຊີນ.

ພາຍຫຼັງທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພົດເປີດກອງປະຊຸມຢ່າງເປັນທາງການ. ກອງປະຊຸມໄດ້ຮັບຟັງບົດລາຍງານການປັບປຸງລັດຖະທຳມະນູນປີ2025 ຈາກທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ; ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ, ບັນດາທ່ານ ສສຊ ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບົດລາຍງານ.

ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ຈະດຳເນີນໄປຈົນຮອດວັນທີ 20 ມີນາ 2025, ຄະນະເລຂາທິການສະພາແຫ່ງຊາດໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນແລະຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

- ສາຍດ່ວນ ໝາຍເລກ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- ແອັບພລິເຄຊັນ: Laona

**(ນາງ ອາລິນ ສຸພົມມະປະດິດ)**

## ຜະລິດສິນຄ້າ...

(ຕໍ່ຈາກໜ້າ 1)

ຂອງທ່ານປອ. ໄຊສົມພອນພົມວິຫານປະທານສະພາແຫ່ງຊາດ, ຫຼັງຈາກຮັບຟັງບົດລາຍງານກ່ຽວກັບການຄົ້ນຄວ້ານະໂຍບາຍພິເສດເພື່ອສົ່ງເສີມ ແລະ ດຶງດູດການລົງທຶນໃນນິຄົມອຸດສາຫະກຳອຳມະຕະ ຈາກທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ; ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ເພື່ອຮັບປະກັນໃຫ້ແກ່ການຊຸກຍູ້ ແລະ ສົ່ງເສີມດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໂດຍມີນິຕິກຳເປັນບ່ອນອີງໃນການຈັດຕັ້ງປະຕິບັດນະໂຍບາຍ ແນໃສ່ການພັດທະນານິຄົມອຸດສາຫະກຳອຳມະຕະ ໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວ ພ້ອມທັງຮັບປະກັນການຄຸ້ມຄອງການຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໂດຍສະເໜີໃຫ້ລັດຖະບານເອົາໃຈໃສ່ດັ່ງນີ້:

- ມີກົນໄກຄຸ້ມຄອງການຈັດເກັບລາຍຮັບຈາກການພັດທະນານິຄົມອຸດສາຫະກຳ ໃຫ້ຄົບຖ້ວນ, ຖືກຕ້ອງ, ຮັບປະກັນຄວາມໂປ່ງໃສ ແລະ ສອດຄ່ອງກັບນິຕິກຳກ່ຽວຂ້ອງ;
- ໃຫ້ຜູ້ລົງທຶນເຂົ້າໃນນິຄົມອຸດສາຫະກຳອຳມະຕະ ນຳທຶນເຂົ້າມາລົງທຶນໃຫ້ບັນລຸຕາມຕົວເລກຄາດໝາຍໃນການດຶງດູດການລົງທຶນ ໃຫ້ໄດ້ 5 ຕື້ໂດລາສະຫະລັດ ໃນໄລຍະ 7 ປີ;
- ໃຫ້ຜູ້ລົງທຶນມີການປະກອບສ່ວນໃນການພັດທະນາຂະແໜງອຸດສາຫະກຳ ເປັນຕົ້ນອຸດສາຫະກຳປຸງແຕ່ງຢູ່ພາຍໃນດ້ວຍການສ້າງສູນຄົ້ນຄວ້າ ຖ່າຍທອດຄວາມຮູ້, ເຕັກໂນໂລຊີແລະນະວັດຕະກຳໃໝ່ ເພື່ອຜະລິດສິນຄ້າຢູ່ໃນນິຄົມອຸດສາຫະກຳໃຫ້ເປັນຜະລິດຕະພັນລາວ (Made in Laos) ທີ່ມີມາດຕະຖານທຽບເທົ່າລະດັບສາກົນ;
- ໃຫ້ຜູ້ພັດທະນາ ຈັດຕັ້ງປະຕິບັດການຍົກຍ້າຍຈັດສັນ, ຊົດເຊີຍໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກການພັດທະນາໂຄງການ, ປະກອບສ່ວນໃນການພັດທະນາຊຸມຊົນແລະທ້ອງຖິ່ນທີ່ນິຄົມອຸດສາຫະກຳຕັ້ງຢູ່ ລວມທັງໃຫ້ບຸລິມະສິດ ແລະ ນຳໃຊ້ແຮງງານພາຍໃນ, ຍົກລະດັບແລະພັດທະນາສີມືແຮງງານໃນການນຳໃຊ້ເຕັກໂນໂລຊີ ໃຫ້ແກ່ແຮງງານດັ່ງກ່າວ;
- ມີກົນໄກການບໍລິການປະຕູດຽວ ຮັບປະກັນໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສແລະກວດສອບໄດ້;
- ມີການປະສານງານໃນການຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ, ຂະແໜງການສູນກາງແລະທ້ອງຖິ່ນດ້ວຍກັນໃຫ້ມີຄວາມໂລ່ງລ່ຽນ, ມີປະສິດທິພາບແລະມີປະສິດທິຜົນພ້ອມທັງມີການຕິດຕາມ, ກວດກາ ແລະ ປະເມີນຜົນການເຄື່ອນໄຫວລົງທຶນຂອງຜູ້ພັດທະນາ ແລະ ຜູ້ລົງທຶນໃນນິຄົມອຸດສາຫະກຳໃນທຸກໆປີແລ້ວສະຫຼຸບລາຍງານຜົນການປະເມີນດັ່ງກ່າວຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;
- ໃຫ້ຜູ້ພັດທະນາ ແລະ ຜູ້ລົງທຶນ ໃຫ້ການຮ່ວມມື ແລະ ປະກອບສ່ວນເຂົ້າໃນວຽກງານຮັກສາຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນນິຄົມອຸດສາຫະກຳ ແລະ ເຂດອ້ອມແອ້ມ ໃຫ້ເຂັ້ມງວດ.

# ກອງປະຊຸມຄັ້ງທີ I-XI ຂອງພັກປະຊາຊົນປະຕິວັດລາວ

ຕໍ່ຈາກສະບັບກ່ອນ

**ກອງປະຊຸມໃຫຍ່ຄັ້ງທີVIຂອງພັກ(18-20ມີນາ1996):**

(1). ກອງປະຊຸມໃຫຍ່ ໄຂຂຶ້ນວັນທີ 18-20 ມີນາ 1996, ທີ່ ນະຄອນຫລວງວຽງຈັນ, ມີຜູ້ແທນສົມບູນເຂົ້າຮ່ວມ 381 ສະຫາຍ ທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກ 78.000 ສະຫາຍ ໃນທົ່ວປະເທດ ແລະ ນອກຈາກນີ້ຍັງມີຄະນະຜູ້ແທນຖືກເຊີນຈາກ ພັກອ້າຍນ້ອງຈຳນວນໜຶ່ງເຂົ້າຮ່ວມນຳ;

(2). ກອງປະຊຸມໄດ້ເລືອກຕັ້ງເອົາສະຫາຍຄຳໄຕສີພັນດອນ ເປັນປະທານຄະນະບໍລິຫານງານສູນກາງພັກ, ມີກົມການເມືອງ 09 ສະຫາຍ, ມີຄະນະບໍລິຫານງານສູນກາງພັກ 49 ສະຫາຍ (ຍິງ 04 ສະຫາຍ);

(3). ເນື້ອໃນສຳຄັນຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກ ແມ່ນໄດ້ສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນຈາກການດຳເນີນພາລະກິດປ່ຽນແປງໃໝ່ ໃນໄລຍະ 10 ປີ ຜ່ານມາ, ເຊິ່ງສາມາດຖອດຖອນໄດ້ 05 ບົດຮຽນ ພື້ນຖານ ຄື:

1. ການເພີ່ມທະວີຄວາມສາມັກຄີເອກະພາບ ໃນທົ່ວພັກທົ່ວປວງຊົນ ຕິດແໜ້ນກັບການເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແມ່ນປັດໄຈຕັດ ສິນຜົນສຳເລັດ ຂອງພາລະກິດປ່ຽນແປງໃໝ່,

2. ອີງໃສ່ປະຊາຊົນ, ເສີມຂະຫຍາຍກຳລັງແຮງອັນມະຫາສານຂອງປະຊາຊົນ ແລະ ເຮັດທຸກສິ່ງທຸກຢ່າງ ເພື່ອຜົນປະໂຫຍດຂອງປະຊາຊົນ;

3. ຮັບປະກັນສະຖຽນລະພາບ ທາງດ້ານການເມືອງ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍ ໃນສັງຄົມ ແມ່ນເງື່ອນໄຂອັນຈຳເປັນ ສຳລັບການປ່ຽນແປງໃໝ່,

4. ເພີ່ມທະວີບົດບາດນຳພາຂອງພັກ ໃນທຸກຂົງເຂດວຽກງານ ແລະ ເຊີດຊູຄວາມສັກສິດແຫ່ງການຄຸ້ມຄອງລັດ ແມ່ນເງື່ອນໄຂຮັບປະກັນໃຫ້ແກ່ການ ປ່ຽນແປງໃໝ່ໃຫ້ດຳເນີນໄປຢ່າງຖືກຕ້ອງຕາມແນວທາງ ແລະ ຈຸດໝາຍຂອງພັກ, ເສີມຂະຫຍາຍກຳລັງແຮງຂອງຊາດ ສົມທົບກັບກຳລັງແຮງຂອງຍຸກສະໄໝ,

5. ຍາດແຍ່ງເອົາການສະໜັບສະໜູນ ແລະ ການຊ່ວຍເຫຼືອຈາກສາກົນຢ່າງມີຫລັກການ.

(4). ກຳນົດຈຸດໝາຍໃຫຍ່ ໃນໄລຍະປີ 2020 "ສູ້ຊົນເຮັດໃຫ້ປະເທດຊາດຫລຸດພົ້ນອອກຈາກສະພາວະດ້ອຍພັດທະນາ, ເສດຖະກິດ-ສັງຄົມ ມີການພັດທະນາ ແລະ ໄດ້ມີການປ່ຽນແປງໃໝ່ດ້ວຍລະດັບຕ່າງກັບສະພາບປະຈຸບັນ" ຄື:

1. ການຜະລິດກະສິກຳ ແລະອຸດສາຫະກຳ ມີການຂະຫຍາຍຕົວ ແລະ ມີບາງດ້ານທັນສະໄໝ,

2. ຊີວິດການເປັນຢູ່ດ້ານວັດຖຸ ແລະ ວັດທະນະທຳ ເປັນປົກກະຕິ ແລະ ມີຄຸນນະພາບສູງຂຶ້ນ,

3. ພົນລະເມືອງໄດ້ຮັບການສຶກສາ ແລະ ບໍລິການດ້ານສາທາລະນະສຸກ ຢ່າງທົ່ວເຖິງ,

4. ວັດທະນະທຳອັນດີງາມຂອງຊາດ ໄດ້ຮັບການເສີມຂະຫຍາຍຢ່າງອຸດົມຮັ່ງມີ.

5. ວຽກງານສະຫວັດດີການສັງຄົມອັນພື້ນຖານ ມີການຮັບປະກັນ,

6. ມີບຸຄະລາກອນ ແລະ ກຳລັງແຮງງານທີ່ມີຄວາມສາມາດຕອບສະໜອງຄວາມຕ້ອງການພື້ນຖານ ຂອງການພັດທະນາປະເທດ,

7. ສັງຄົມມີຄວາມສະຫງົບສຸກ, ສີວິໄລ ແລະ ຍຸຕິທຳ, ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ມີພັກເປັນແກນນຳ ມີຄວາມໜັກແໜ້ນ, ເຂັ້ມແຂງ,

8. ມີການພົວພັນຮ່ວມມືອັນກວ້າງຂວາງ ກັບສາກົນ ແລະ ສາມາດເຈືອຈານເຂົ້າກັບທ່າອ່ຽງລວມຂອງຍຸກສະໄໝ.

(5). ກອງປະຊຸມໃຫຍ່ໄດ້ກຳນົດຈຸດໝາຍສຳລັບ 05 ປີຕໍ່ໜ້າ (1996-2000) ຄື:

1.ສູ້ຊົນຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງໃນລະດັບ 8-8,5% ຕໍ່ປີ, ຮອດປີ 2000 ລາຍໄດ້ສະເລ່ຍ ຕາມຫົວຄົນໃຫ້ໄດ້ 500 ໂດລາ,

2. ສ້າງກິດຈະການພື້ນຖານ ຈຳນວນໜຶ່ງໃຫ້ເປັນໜໍ່ແໜງສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂັ້ນຕໍ່ໄປ,

3. ແກ້ໄຂຄວາມອຶດຢາກຂາດເຂີນ ແລະ ຄວາມທຸກຍາກຂອງປະຊາຊົນ ໃນບໍລິເວນຈຸດສຸມຈຳນວນໜຶ່ງ ດ້ວຍການ ພັດທະນາຊົນນະບົດຮອບດ້ານ.

(6). ກອງປະຊຸມໃຫຍ່ໄດ້ກຳນົດທິດທາງໜ້າທີ່ລວມຄື:

1. ເພີ່ມທະວີຄວາມສາມັກຄີເປັນເອກະພາບ ພາຍໃນພັກ ແລະ ໃນທົ່ວປວງຊົນ, ຮັບປະກັນສະຖຽນລະພາບ ແລະ ຄວາມສະຫງົບ ໃຫ້ໄດ້ຢ່າງໜັກແໜ້ນ, ສ້າງເງື່ອນໄຂອັນເອື້ອອຳນວຍສຳລັບການທຳມາຫາກິນຂອງປະຊາຊົນ ແລະ ການສ້າງສາພັດທະນາປະເທດຊາດ,

2. ປົກປັກຮັກສາ ເອກະລາດ ແລະ ອະທິປະໄຕ ຂອງຊາດໄວ້ຢ່າງໝັ້ນຄົງ,

3. ລະດົມກຳລັງແຮງຂອງທຸກພາກສ່ວນເສດຖະກິດ ແລະທົ່ວສັງຄົມເຂົ້າໃນການພັດທະນາສ້າງສາປະເທດຊາດ,

4. ເສີມຂະຫຍາຍນ້ຳໃຈຮັກຊາດ ຕິດພັນກັບຮັກລະບອບໃໝ່, ເຊີດຊູສະຕິຊາດເອກະລາດ, ເປັນເຈົ້າຕົນເອງ, ດຸໝັ່ນ ແລະ ປະຢັດໃນການສ້າງສາປະເທດຊາດ,

5. ສູ້ຊົນໃຫ້ມີການສະສົມ ຈາກພາຍໃນປະເທດ, ເຮັດໃຫ້ການເງິນແຫ່ງຊາດມີຄວາມໝັ້ນທ່ຽງແລະເປັນເຈົ້າຕົນເອງເທື່ອລະກ້າວ,

6. ປະຕິບັດນະໂຍບາຍປະຊາກອນຢ່າງຕັ້ງໜ້າ, ເຮັດໃຫ້ການເພີ່ມຂຶ້ນຂອງພົນລະເມືອງ ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ, ຍົກລະດັບຄວາມຮູ້ ຂອງປະຊາຊົນບັນດາເຜົ່າກໍ່ສ້າງແຮງງານວິຊາຊີບ ແລະ ບຸກຄະລາກອນໃຫ້ສາມາດຕອບສະໜອງຄວາມຕ້ອງການອັນຮີບດ່ວນ ໃນສະເພາະໜ້າ ຂອງການພັດທະນາປະເທດ, ແກ້ໄຂບັນຫາຕ່າງໆທາງສັງຄົມ, ເຮັດໃຫ້ສັງຄົມມີຄວາມສີວິໄລ ແລະ ຍຸຕິທຳ,

7. ເພີ່ມທະວີບົດບາດ ແລະ ຊີດຊູຄວາມສາມາດນຳພາ ຂອງພັກ ໃນທຸກຂົງເຂດວຽກງານ,

8. ປັບປຸງ ແລະ ຍົກສູງປະສິດທິພາບ ແຫ່ງການຄຸ້ມຄອງດ້ວຍກົດໝາຍ ຂອງລັດຕໍ່ເສດຖະກິດ-ສັງຄົມ,

9. ຍູ້ແຮງການເຄື່ອນໄຫວ ຂອງ ບັນດາອົງການຈັດຕັ້ງມະຫາຊົນ, ເສີມຂະຫຍາຍສິດເປັນເຈົ້າຕົນເອງ ຂອງປະຊາຊົນ, ເສີມສ້າງສາຍພົວພັນມິດຕະພາບ ກັບນາໆຊາດ ແລະ ເປີດກວ້າງ ການພົວພັນຮ່ວມມືກັບເພື່ອນມິດສາກົນ.

(7). ກອງປະຊຸມ ໄດ້ຮັບຮອງເອົາກົດລະບຽບຂອງພັກ ສະບັບດັດແປງໃໝ່, ເຊິ່ງໄດ້ປັບປຸງເພີ່ມເຕີມ ແລະ ເນັ້ນໜັກລັກສະນະຊົນຊັ້ນ ແລະ ອຸດົມການຂອງພັກ, ເປັນຕົ້ນ ໄດ້ກຳນົດແຈ້ງທິດນຳໃນການກໍ່ສ້າງພັກ ຄື:

1. ເອົາໃຈໃສ່ສຶກສາອົບຮົມ ແລະກໍ່ສ້າງພັກໃຫ້ເຂັ້ມແຂງທາງດ້ານການເມືອງ, ແນວຄິດ ແລະການຈັດຕັ້ງ,

2. ສົມທົບ ລະຫວ່າງການກໍ່ສ້າງພັກ ກັບການເພີ່ມທະວີຄວາມສັກສິດ ໃນການຄຸ້ມຄອງລັດ, ເສີມຂະຫຍາຍບົດບາດຂອງບັນດາອົງການຈັດຕັ້ງມະຫາຊົນ,

3. ການປັບປຸງກໍ່ສ້າງພັກ ຕ້ອງຖືເອົາຄຸນນະພາບເປັນກົກ, ຮັບເອົາຜູ້ທີ່ດີເດັ່ນ ມີເງື່ອນໄຂມາດຖານຄົບຖ້ວນເຂົ້າພັກ ແລະເດັດດ່ຽວເອົາຜູ້ເສື່ອມຄຸນປ່ຽນທາດ ອອກຈາກພັກ.

**ກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ (ວັນທີ 12-14 ມີນາ 2001):**

(1). ກອງປະຊຸມດຳເນີນແຕ່ວັນທີ 12-14 ມີນາ 2001 ທີ່ນະຄອນຫລວງວຽງຈັນ, ກອງປະຊຸມໃຫຍ່ມີຜູ້ແທນສົມບູນ452 ສະຫາຍທີ່ມາຈາກບັນດາຂະແໜງການອ້ອມຂ້າງສູນກາງ, ທ້ອງຖິ່ນ ແລະຮາກຖານຕ່າງໆໃນທົ່ວປະເທດ ເຊິ່ງເປັນຕົວແທນໃຫ້ສະມາຊິກພັກທັງໝົດ ຈຳນວນ 100.000 ກວ່າສະຫາຍ;

(2). ກອງປະຊຸມເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກ 53 ສະຫາຍ, ກອງປະຊຸມຄັ້ງປະຖົມມະລຶກເລືອກເອົາກົມການເມືອງ 11 ສະຫາຍ ແລະ ເລືອກເອົາ ສະຫາຍ ຄຳໄຕ ສີພັນດອນ ເປັນປະທານຄະນະບໍລິຫານງານສູນກາງພັກເປັນສະໄໝທີ 02;

(3). ເນື້ອໃນຕົ້ນຕໍໂດຍຫຍໍ້ຂອງມະຕິ ແມ່ນຖອດຖອນໄດ້ບົດຮຽນ 05 ປະການ ຄື:

1. ຍຶດໝັ້ນໃນລັດທິມາກ-ເລນິນ ແລະ ຈຸດໝາຍສັງຄົມນິຍົມ,

2. ເອົາໃຈໃສ່ປັບປຸງກໍ່ສ້າງພັກໃຫ້ເຂັ້ມແຂງ, ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ,

3. ເອົາໃຈໃສ່ສ້າງກຳລັງທີ່ຈິງຮັກພັກດີ, ໂດຍສະເພາະແມ່ນຜູ້ເປັນຫລັກແຫລ່ງນຳພາແຕ່ລະຂັ້ນ,

4. ຍຶດໝັ້ນໃນທັດສະນະມະຫາຊົນ, ຖືປະຊາຊົນເປັນກົກ,

5. ສ້າງສະພາບແວດລ້ອມພາຍໃນ ແລະ ພາຍນອກອັນອຳນວຍ;

(4). ກອງປະຊຸມໄດ້ກຳນົດກ່ຽວກັບທິດທາງໜ້າທີ່ຈຸດສຸມ:

ໜຶ່ງ. ຄາດໝາຍສູ້ຊົນ ແຕ່ນີ້ຮອດ ປີ 2020:

1. ເຮັດໃຫ້ປະເທດຊາດຫລຸດພົ້ນຈາກຄວາມດ້ອຍພັດທະນາ, ເປັນປະເທດທີ່ມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມສະຫງົບ-ປອດໄພທາງສັງຄົມ ຢ່າງໜັກແໜ້ນ;

2. ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ແລະ ໝັ້ນທ່ຽງດ້ວຍຈັງຫວະໄວພໍສົມຄວນ;

3. ປະຊາຊົນມີຊີວິດການເປັນຢູ່ລື່ນລະດັບປະຈຸບັນ03ເທົ່າ, ເສດຖະກິດແຫ່ງຊາດ ມີພື້ນຖານອັນໝັ້ນຄົງດ້ວຍໂຄງປະກອບກະສິກຳ-ປ່າໄມ້ຕິດແໜ້ນກັບອຸດສາຫະກຳ ແລະ ບໍລິການທີ່ມີຄວາມສົມສ່ວນ ແລະ ຕັ້ງໜ້າ;

4. ເສດຖະກິດຕະຫລາດທີ່ມີການຄຸ້ມຄອງຂອງລັດ ໄດ້ເປັນລະບົບ ແລະ ມີປັດໄຈພື້ນຖານແຫ່ງການຫັນເປັນອຸດສາຫະກຳ ແລະທັນສະໄໝ,

5. ບັນດາພາກສ່ວນເສດຖະກິດ ລ້ວນແຕ່ຂະຫຍາຍຕົວຢ່າງກົມກຽວແລະເປັນອົງປະກອບກຳລັງແຮງຂອງເສດຖະກິດແຫ່ງຊາດ, ໃນນັ້ນ ພາກສ່ວນເສດຖະກິດຂອງລັດ ແລະ ພາກສ່ວນເສດຖະກິດຮ່ວມມືຂອງປະຊາຊົນກວມສ່ວນຫລາຍໃນເສດຖະກິດແຫ່ງຊາດ,

6. ລະບົບການເມືອງທີ່ມີພັກປະຊາຊົນ ປະຕິວັດລາວເປັນແກນນຳມີຄວາມໜັກແໜ້ນ, ລັກສະນະລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ສະແດງອອກຈະແຈ້ງ,

7. ສິດທິຂອງພົນລະເມືອງມີການຮັບປະກັນ ດ້ວຍການຄຸ້ມຄອງຕາມກົດໝາຍທີ່ສັກສິດ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນປຶກແຜ່ນ, ມີລະດັບການສຶກສາທົ່ວໄປຈົບມັດທະຍົມຕອນຕົ້ນ, ໄດ້ຮັບການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງແລະມີເງື່ອນໄຂພັດທະນາຕົນເອງດີຂຶ້ນ,

8. ວັດທະນະທຳອັນດີງາມຂອງຊາດໄດ້ຮັບການປົກປັກຮັກສາ ແລະ ພັດທະນາໃຫ້ອຸດົມຮັ່ງມີຕື່ມອີກ. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີການພົວພັນຮ່ວມມືກວ້າງຂວາງກັບນາໆຊາດ ເພື່ອຜົນປະໂຫຍດອັນຊອບທຳຂອງຊາດ ແລະ ສາມາດເຂົ້າຮ່ວມໃນການເຄື່ອນໄຫວສາກົນໄດ້ຢ່າງເປັນເຈົ້າການ.

ສອງ. ຄາດໝາຍສູ້ຊົນສຳລັບໄລຍະ 05 ປີ ຕໍ່ໜ້າ (2001-2005):

1. ຮັບປະກັນໃຫ້ປະເທດບຊາດສືບຕໍ່ມີຄວາມສະຫງົບທາງສັງຄົມ ແລະ ມີສະຖຽນລະພາບທາງດ້ານການເມືອງອັນໜັກແໜ້ນ,

2. ຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ໃນລະດັບສະເລ່ຍບໍ່ຫລຸດ 7% ຕໍ່ປີ ທັງມີຄວາມໝັ້ນທ່ຽງ ແລະ ຖືກທິດ,

3. ແກ້ໄຂຄວາມທຸກຍາກ ຂອງປະຊາຊົນໃຫ້ໄດ້ກວ່າເຄິ່ງໜຶ່ງ ຂອງຈຳນວນຄອບຄົວທີ່ທຸກຍາກໃນປະຈຸບັນ,

4. ຢຸດຕິການຖາງປ່າເຮັດໄຮ່ປູກເຂົ້າໃຫ້ໄດ້ໂດຍພື້ນຖານ ແລະ ຢຸດຕິການປູກຝິ່ນໃຫ້ໄດ້ຢ່າງສິ້ນເຊີງ,

5. ສ້າງກິດຈະກຳ ອັນເປັນພື້ນຖານໃຫ້ໄດ້ຈຳນວນໜຶ່ງ ເພື່ອການກ້າວເຂົ້າສູ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂັ້ນຕໍ່ໄປ,

6. ສ້າງພົນລະເມືອງລາວ ໃຫ້ເປັນຜູ້ມີຄຸນສົມບັດສິນທຳ, ຮູ້ຈັກກົດໝາຍ ແລະເຄົາລົບກົດໝາຍ, ມີສຸຂະພາບແຂງແຮງ, ມີຄວາມທົນທານຕໍ່ໜ້າທີ່ວຽກງານ,

7. ສ້າງບຸກຄະລາກອນໃຫ້ພຽງພໍ ກັບຄວາມຕ້ອງການ ຂອງການປະຕິບັດສອງໜ້າທີ່ຍຸດທະສາດ,

8. ກ່ຽວກັບດ້ານການເມືອງ ແມ່ນຕ້ອງຮັກສາ ແລະ ເຊີດຊູບົດບາດການນຳຂອງພັກໃຫ້ສູງຂຶ້ນ, ສ້າງໃຫ້ລັດມີຄວາມສັກສິດໃນການບໍລິຫານ ແລະ ຫລຸດຜ່ອນ ປະກົດການຫຍໍ້ທໍ້ຕ່າງໆລົງໃຫ້ໄດ້,

9. ກ່ຽວກັບຂົງເຂດການຕ່າງປະເທດ, ມີການພົວພັນມິດຕະພາບ ກັບນາໆຊາດ ແລະ ມີການຮ່ວມມືກັບເພື່ອນມິດໃນໂລກຢ່າງກວ້າງຂວາງ.

ສາມ. ຄາດໝາຍສູ້ຊົນສຳລັບ ໄລຍະ ປີ 2006-2010:

1. ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ໂດຍສະເລ່ຍບໍ່ໃຫ້ຫຼຸດ

ອ່ານຕໍ່ໜ້າ 7

## ກອງປະຊຸມຄັ້ງທີ I-XI...

(ຕໍ່ຈາກໜ້າ 7)

7% ຕໍ່ປີ,

2. ຢຸດຕິການຖາງປ່າເຮັດໄຮ່ປູກເຂົ້າຢ່າງສິ້ນເຊີງ, ຄອບຄົວທີ່ທຸກຍາກໃຫ້ໄດ້ຮັບການແກ້ໄຂ,

3. ມີພື້ນຖານໂຄງລ່າງເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກໂນໂລຢີ ແລະ ບຸກຄະລາກອນເພື່ອຮອງຮັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ;

(5). ເພື່ອຈັດຕັ້ງປະຕິບັດຄາດໝາຍສູ້ຊົນທີ່ວາງອອກນັ້ນໃຫ້ປະກົດຜົນເປັນຈິງ, ກອງປະຊຸມໄດ້ວາງທິດທາງໜ້າທີ່ລວມ ຄື:

1. ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ໃນທົ່ວປວງຊົນ, ເສີມຂະຫຍາຍ ນໍ້າໃຈຮັກຊາດ, ເອກະລາດເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຢູ່ພາຍໃນ ຢ່າງສຸດຂີດ ສົມທົບກັບການຍາດແຍ່ງເອົາການຮ່ວມມືຊ່ວຍເຫຼືອຈາກພາຍນອກຢ່າງຕັ້ງໜ້າເພື່ອປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ສືບຕໍ່ດຳເນີນການປ່ຽນແປງໃໝ່.

2. ທົ່ວພັກ, ທົ່ວປວງຊົນເຮົາຕ້ອງພ້ອມກັນສຸມເຫື່ອແຮງ ແລະ ສະຕິປັນຍາໃສ່ການຂະຫຍາຍເສດຖະກິດ ໂດຍຖືເອົາການສ້າງສາພັດທະນາເສດຖະກິດ ເປັນໜ້າທີ່ໃຈກາງຕິດພັນກັບການແກ້ໄຂບັນຫາສັງຄົມ ແລະ ການພັດທະນາ ຄົນລາວໃຫ້ມີຄວາມກ້າວໜ້າໄປພ້ອມແຕ່ຫົວທີ; ມີມາດຕະການອັນຄົບຊຸດ ເພື່ອແກ້ໄຂຄວາມທຸກຍາກ ຂອງປະຊາຊົນໃຫ້ດີຂຶ້ນເປັນກ້າວໆຢ່າງຈະແຈ້ງ.

3. ເພີ່ມທະວີບົດບາດການນຳພາຂອງພັກ ໃນທຸກຂົງເຂດວຽກງານ ໄປຄຽງຄູ່ກັບການປັບປຸງກົງຈັກລັດໃຫ້ມີຄວາມສັກສິດ ແລະ ມີປະສິດທິພາບ. ຊຸກຍູ້ວຽກງານແນວໂຮມ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນຢ່າງຕັ້ງໜ້າ.

**ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ (18-21 ມີນາ 2006)**

1. ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງນີ້ ມີຜູ້ແທນ 498 ສະຫາຍທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກທັງໝົດ ຈຳນວນ 148.590 ສະຫາຍ ຢູ່ບັນດາຂະແໜງການ ອ້ອມຂ້າງສູນກາງ, ທ້ອງຖິ່ນ ແລະ ຮາກຖານຕ່າງໆ ໃນທົ່ວປະເທດ;

2. ກອງປະຊຸມຄັ້ງນີ້ ໄດ້ເລືອກເອົາ 55 ສະຫາຍ ເປັນຄະນະບໍລິຫານງານສູນກາງພັກ ເລືອກເອົາ ສະຫາຍ ຈູມມາລີ ໄຊຍະສອນ ເປັນເລຂາທິການໃຫຍ່, ກົມການເມືອງ ປະກອບມີ 11 ສະຫາຍ, ເລືອກຕັ້ງເອົາຄະນະເລຂາທິການສູນກາງພັກ 07 ສະຫາຍ, ເລືອກເອົາປະທານ ແລະ ຮອງປະທານ ຄະນະກຳມະການກວດກາພັກຂັ້ນສູນກາງ ຈຳນວນ 03 ສະຫາຍ.

ສັງລວມຫຍໍ້ເນື້ອໃນຂອງມະຕິ ມີດັ່ງນີ້:

(1). ສະຫລຸບຕີລາຄາການປະຕິບັດແນວທາງປ່ຽນແປງໃໝ່ໃນ 20 ປີ ແລະ ການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ ໂດຍມີຂໍ້ສະຫລຸບ ທີ່ສຳຄັນ ແລະ ຕົ້ນຕໍ ດັ່ງນີ້:

1. ແນວທາງປ່ຽນແປງໃໝ່ ແມ່ນຖືກຕ້ອງສອດຄ່ອງກັບສະພາວະຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ ຂອງປະເທດເຮົາ, ຖືກກັບຄວາມມຸ່ງມາດປາຖະໜາ ຂອງປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນ ແລະ ໄດ້ຮັບການສະໜັບສະໜູນຈາກພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ, ເປັນປັດໄຈຮັບປະກັນສະຖຽນລະພາບທາງການເມືອງ ແລະ ຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ;

2. ແນວທາງປ່ຽນແປງໃໝ່ໄດ້ສ້າງເງື່ອນໄຂ ແລະ ກາລະໂອກາດໃໝ່ໃຫ້ແກ່ການຂຸດຄົ້ນກຳລັງແຮງສັງລວມພາຍໃນຊາດສົມທົບກັບກຳລັງແຮ ຂອງສາກົນ ເຂົ້າໃນການພັດທະນາ, ເຮັດໃຫ້ເສດຖະກິດແຫ່ງຊາດມີຊີວິດຊີວາ ແລະ ຂະຫຍາຍຕົວຕໍ່ເນື່ອງຕະຫຼອດໄລຍະ 20 ປີ ໃນລະດັບ ສະເລ່ຍ 6,2%, ເຊິ່ງເຮັດໃຫ້ລວມຍອດຜະລິດຕະພັນພາຍ ໃນໄລ່ສະເລ່ຍຕາມຫົວຄົນເພີ່ມຂຶ້ນກວ່າ 02 ເທົ່າຕົວ, ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບການປັບປຸງແລະຍົກສູງຂຶ້ນລື່ນແຕ່ກ່ອນຢ່າງຈະແຈ້ງ;

3. ແນວທາງປ່ຽນແປງໃໝ່ໄດ້ກຳນົດທິດທາງຢ່າງຖືກຕ້ອງ ແລະ ຮັບປະກັນການປັບປຸງບູລະນະລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງຍິ່ງຂຶ້ນ, ເປັນຕົ້ນ ແມ່ນໄດ້ເຮັດໃຫ້ບົດບາດ ການນຳພາຂອງພັກໄດ້ຮັບການເຊີດຊູສູງຂຶ້ນ ແລະ ເຮັດໃຫ້ຄວາມສາມັກຄີປອງດອງ ຂອງປວງຊົນລາວບັນດາເຜົ່າ ແໜ້ນແຟ້ນຂຶ້ນ. ພ້ອມກັນນັ້ນກໍເຮັດໃຫ້ການພົວພັນຮ່ວມມືກັບຕ່າງປະເທດ ນັບມື້ນັບເປີດກວ້າງອອກ ແລະ ບົດບາດອິດທິພົນ ຂອງພັກ ກໍຄື ຂອງປະເທດເຮົາສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

(2). ກອງປະຊຸມໃຫຍ່ ໄດ້ຢືນຢັນ ກ່ຽວກັບການເສີມຂະຫຍາຍ 05 ບົດຮຽນແຫ່ງການປ່ຽນແປງໃໝ່ເຂົ້າໃນພາລະກິດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃນຂັ້ນຕໍ່ໄປ ຄື :

1. ຕ້ອງສືບຕໍ່ເພີ່ມທະວີຄວາມສາມັກຄີເປັນເອກະພາບໃນທົ່ວພັກ, ທົ່ວປວງຊົນ ຕິດແໜ້ນກັບການເຊີດຊູນໍ້າໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດເປັນເຈົ້າຕົນເອງ, ເພິ່ງຕົນເອງແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຖືອັນນີ້ເປັນປັດໄຈຕັດສິນຜົນສຳເລັດຂອງພາລະກິດປ່ຽນແປງໃໝ່;

2. ຕ້ອງຢຶດໝັ້ນໃນແນວທາງ ອີງໃສ່ປະຊາຊົນ, ເສີມຂະຫຍາຍກຳລັງແຮງອັນມະຫາສານຂອງປະຊາຊົນ ແລະ ເຮັດທຸກສິ່ງທຸກຢ່າງເພື່ອຜົນປະໂຫຍດ ຂອງປະຊາຊົນ, ເດັດດ່ຽວສະກັດກັ້ນ ແລະ ກຳຈັດປັດເປົ່າພະຍາດອາດຍາສິດ;

3. ປ່ຽນແປງໃໝ່ ຕ້ອງຮັບປະກັນສະຖຽນລະພາບທາງການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເອົາບັນຫານີ້ເປັນພື້ນຖານໃຫ້ແກ່ການສ້າງສາພັດທະນາ; ການສືບຕໍ່ພາລະກິດປ່ຽນແປງໃໝ່ ຕ້ອງດຳເນີນໄປຢ່າງຄົບຊຸດ, ຮອບຄອບດ້ວຍບາດກ້າວອັນເໝາະສົມ ໂດຍຢຶດໝັ້ນ 06 ຫຼັກການ ພື້ນຖານ;

4. ປັບປຸງ ແລະ ເພີ່ມທະວີບົດບາດນຳພາຂອງພັກ ໃນທຸກຂົງເຂດວຽກງານ, ພ້ອມກັນນັ້ນ ກໍ່ເຊີດຊູຄວາມສັກສິດ ແຫ່ງການຄຸ້ມຄອງ ຂອງລັດຕາມກົດໝາຍ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ຮັບປະກັນໃຫ້ການສ້າງສາພັດທະນາດຳເນີນໄປຖືກຕາມແນວທາງ ແລະຈຸດໝາຍຂອງພັກ;

5. ຕັ້ງໜ້າປະຕິບັດທິດນຳແຫ່ງການເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ສົມທົບກັບກຳລັງແຮງຂອງຍຸກສະໄໝ, ຍາດແຍ່ງເອົາການສະໜັບສະໜູນຊ່ວຍເຫລືອ ຈາກສາກົນຢ່າງມີຫລັກການ ເພື່ອຊຸກຍູ້ການສ້າງສາພັດທະນາປະເທດຊາດ ໃຫ້ກ້າວໜ້າຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

(3). ໂດຍກຳແໜ້ນທ່າອ່ຽງລວມ ຂອງສະພາບແວດລ້ອມສາກົນ ແລະສະພາວະຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາ, ກອງປະຊຸມໃຫຍ່ ໄດ້ເຫັນພ້ອມຮັບຮອງເອົາຄາດໝາຍສູ້ຊົນ ສຳລັບໄລຍະຮອດປີ 2020 ແລະ ປີ 2010 ດັ່ງນີ້:

1. ເມື່ອຮອດປີ 2020 :

- ປະເທດເຮົາຕ້ອງຫລຸດພົ້ນອອກຈາກຄວາມດ້ອຍພັດທະນາ, ເປັນປະເທດທີ່ມີຄວາມໝັ້ນຄົງທາງການເມືອງ ແລະ ມີຄວາມສະຫງົບປອດໄພທາງສັງຄົມທີ່ໜັກແໜ້ນ;

- ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ແລະ ໝັ້ນທ່ຽງດ້ວຍຈັງວະໄວພໍສົມຄວນ;

- ປະຊາຊົນມີຊີວິດການເປັນຢູ່ລື່ນລະດັບປັດຈຸບັນ 3 ເທົ່າ, ເສດຖະກິດແຫ່ງຊາດມີພື້ນຖານອັນໝັ້ນຄົງ ດ້ວຍໂຄງປະກອບກະສິກຳ-ປ່າໄມ້ ຕິດແໜ້ນ ກັບອຸດສາຫະກຳ ແລະ ການບໍລິການ ທີ່ມີຄວາມສົມສ່ວນ ແລະ ຕັ້ງໜ້າ, ມີຄວາມສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະສາກົນ;

- ບັນດາພາກສ່ວນເສດຖະກິດ ລ້ວນແຕ່ມີກຳລັງແຮງ ແລະ ຂະຫຍາຍຕົວຢ່າງກົມກຽວ, ໃນນັ້ນ ພາກສ່ວນເສດຖະກິດຂອງລັດ ແລະພາກສ່ວນເສດຖະກິດຮ່ວມມືຂອງປະຊາຊົນ ກວມສ່ວນຫລາຍໃນເສດຖະກິດແຫ່ງຊາດ;

- ເສດຖະກິດຕະຫລາດທີ່ມີການຄຸ້ມຄອງຂອງລັດ ໄດ້ເປັນລະບົບ ແລະ ມີປັດໄຈພື້ນຖານແຫ່ງການຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ.

- ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ທີ່ມີພັກເປັນແກນນຳ ມີຄວາມໜັກແໜ້ນ, ທາດແທ້ຂອງລັດ ທີ່ເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ສະແດງອອກຢ່າງຈະແຈ້ງ, ສິດທິຂອງພົນລະເມືອງ ມີການຮັບປະກັນ ດ້ວຍການຄຸ້ມຄອງຕາມກົດໝາຍຢ່າງສັກສິດ, ປະຊາຊົນບັນດາເຜົ່າ ມີຄວາມສາມັກຄີເປັນປຶກແຜ່ນ ແລະ ມີເງື່ອນໄຂພັດທະນາຕົນເອງທີ່ດີຂຶ້ນ ໂດຍມີລະດັບການສຶກສາຈົບຊັ້ນປະຖົມ ໃນນັ້ນ ສ່ວນໃຫຍ່ ແມ່ນຈົບມັດທະຍົມຕອນຕົ້ນ ແລະ ໄດ້ຮັບການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ;

- ວັດທະນະທຳອັນດີງາມ ຂອງຊາດໄດ້ຮັບການປົກປັກຮັກສາ ແລະ ພັດທະນາໃຫ້ອຸດົມຮັ່ງມີຕື່ມອີກ;

- ສປປລາວ ມີການພົວພັນຮ່ວມມືອັນກວ້າງຂວາງກັບສາກົນ ເພື່ອນຳເອົາຜົນປະໂຫຍດມາໃຫ້ປະເທດຊາດ ແລະ ສາມາດເຂົ້າຮ່ວມກັບປະຊາຄົມໂລກ ໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມືພັດທະນາ;

2. ສຳລັບໄລຍະ ແຕ່ 2006 ຮອດປີ 2010 ແມ່ນ:

- ເຮັດໃຫ້ທົ່ວປະເທດມີສະຖຽນລະພາບອັນໜັກແໜ້ນ, ສ້າງເງື່ອນໄຂອຳນວຍໃຫ້ເສດຖະກິດຂະຫຍາຍຕົວ ໃນລະດັບຕໍ່ເນື່ອງ, ບັນລຸຄາດໝາຍ 7,5% ຂຶ້ນໄປ ໃນແຕ່ລະປີ, ດ້ວຍການພັດທະນາຂະແໜງການກະສິກຳ-ປ່າໄມ້ຕິດແໜ້ນກັບອຸດສາຫະກຳແລະການບໍລິການ ຢ່າງແຂງແຮງ ແລະມີຈຸດສຸມ.

- ສ້າງໂຄງປະກອບທີ່ມີຄວາມສົມສ່ວນຫລາຍຂຶ້ນ ແລະ ມີດ້ານທັນສະໄໝ, ເສີມຂະຫຍາຍກຳລັງແຮງຂອງທຸກພາກສ່ວນເສດຖະກິດ ແລະ ການພົວພັນ ຮ່ວມມືກັບຕ່າງປະເທດຢ່າງແຂງແຮງ.

- ບົນພື້ນຖານການຜະລິດກະສິກຳທີ່ໜັກແໜ້ນ ແລະ ການຂຸດຄົ້ນຂະແໜງການ ທີ່ເປັນທ່າແຮງຢ່າງມີປະສິດທິຜົນນັ້ນ ການຖາງປ່າເຮັດໄຮ່ປູກເຂົ້າ ຕ້ອງຢຸດຕິຢ່າງສິ້ນເຊີງ ໂດຍມີອາຊີບໃໝ່ປ່ຽນແທນທີ່ໝັ້ນຄົງ, ຄອບຄົວທີ່ທຸກຍາກ ໄດ້ຮັບການແກ້ໄຂໂດຍພື້ນຖານ.

- ປະເທດເຮົາມີພື້ນຖານໂຄງລ່າງເສດຖະກິດ-ເຕັກນິກ, ວັດທະນະທຳ, ວິທະຍາສາດ ແລະ ບຸກຄະລາກອນທີ່ມີຄຸນນະພາບ ຈຳນວນໜຶ່ງ ເພື່ອຮອງຮັບການຫັນເປັນທັນສະໄໝ;

- ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ ຂອງປະຊາຊົນໄດ້ຮັບການປັບປຸງ ແລະ ຍົກສູງຂຶ້ນຕື່ມ; ລາຍໄດ້ສະເລ່ຍຢູ່ໃນລະດັບ 800 ໂດລາ ຕໍ່ຄົນຕໍ່ປີ.

(4). ສູ້ຊົນປະຕິບັດ 07 ທິດທາງ, ໜ້າທີ່ລວມ ດັ່ງນີ້:

1. ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ຄວາມເປັນປຶກແຜ່ນໃນທົ່ວປວງຊົນ, ຍົກສູງຈິດໃຈສູ້ຊົນ, ຄວາມດຸໝັ່ນປະດິດສ້າງ ແລະ ນໍ້າໃຈຮັກຊາດ ເອກະລາດ ເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງ ດ້ວຍຕົນເອງ ໃນພາລະກິດປົກປັກຮັກສາ ແລະພັດທະນາປະເທດຊາດ, ໂດຍຖືເອົາການພັດທະນາເສດຖະກິດເປັນໃຈກາງ, ຍູ້ແຮງການເຕີບໂຕທາງເສດຖະກິດຕິດພັນກັບການແກ້ໄຂບັນຫາສັງຄົມ, ຮັບປະກັນໃຫ້ການຂະຫຍາຍຕົວດຳເນີນໄປຖືກຕາມຈຸດໝາຍສັງຄົມນິຍົມ, ກ້າວໄປທັນກັບກະແສການພັດທະນາຂອງໂລກ, ກຳຈັດພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ; ສະກັດກັ້ນການຫັນປ່ຽນໂດຍສັນຕິ ຂອງອິດທິກຳລັງປໍລະປັກ.

2. ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຢູ່ພາຍໃນປະເທດຢ່າງສຸດຂີດ ໂດຍອີງໃສ່ຄົນລາວ ແລະ ຊັບພະຍາກອນຂອງຊາດທີ່ເຮົາມີສົມທົບກັບການເປັນເຈົ້າການຍາດແຍ່ງເອົາການຮ່ວມມືຈາກພາຍນອກ; ເພີ່ມທະວີການ ພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ, ເພີ່ມຄວາມເປັນເຈົ້າການ ແລະ ຄວາມສາມາດແຂ່ງຂັນໃຫ້ສູງຂຶ້ນ ໃນການເຊື່ອມໂຍງກັບບັນດາປະເທດໃນພາກພື້ນ ແລະໃນໂລກ ເພື່ອຍູ້ການຜະລິດ ແລະ ການບໍລິການໃຫ້ຂະຫຍາຍຕົວ; ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ສ້າງຄວາມຮັ່ງມີເຂັ້ມແຂງໃຫ້ແກ່ປະເທດຊາດ;

3. ຂະຫຍາຍກຳລັງການຜະລິດ ຕິດພັນກັບການສ້າງ ແລະ ປັບປຸງການພົວພັນການຜະລິດໃຫ້ສອດຄ່ອງ ດ້ວຍການເສີມຂະຫຍາຍກຳລັງແຮງ ແລະ ຄຸນປະໂຫຍດຂອງທຸກພາກສ່ວນເສດຖະກິດ ໄປຄຽງຄູ່ກັບການປັບປຸງແລະກໍ່ສ້າງພາກສ່ວນເສດຖະກິດຂອງລັດແລະພາກສ່ວນເສດຖະກິດຮ່ວມມືຂອງປະຊາຊົນໃຫ້ເຕີບໃຫຍ່ເຂັ້ມແຂງຂຶ້ນ ເພື່ອເປັນຫລັກແຫລ່ງ ແລະ ສາມາດດຳລົງບົດບາດເປັນເຈົ້າພາທາງ; ປະຕິບັດການຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ ບົນພື້ນຖານການນຳໃຊ້ເຕັກໂນໂລຢີໃໝ່ ເຂົ້າໃນບາງຂົງເຂດ, ບາງຂະແໜງການທີ່ເປັນທ່າແຮງ ແລະ ເສດຖະກິດຊົນນະບົດ ເຊັ່ນ: ກະສິກຳ-ປ່າໄມ້, ອຸດສາຫະກຳປຸງແຕ່ງ, ຂະແໜງໄຟຟ້າໂດຍສະເພາະ ໄຟຟ້ານໍ້າຕົກ; ການບໍລິການທາງຜ່ານ, ການທ່ອງທ່ຽວ ແລະ ຂະແໜງບໍ່ແຮ່ ເພື່ອສ້າງໂຄງປະກອບ ເສດຖະກິດ ກະສິກຳ-ປ່າໄມ້ ຕິດພັນກັບອຸດສາຫະກຳ ແລະ ການບໍລິການ ກໍຄື ໂຄງປະກອບເສດຖະກິດ ຕາມເຂດແຄວ້ນ ໃຫ້ເປັນຕົນ ເປັນຕົວຂຶ້ນຢ່າງສອດຄ່ອງໃນທົ່ວປະເທດ;

4. ຕັ້ງໜ້າສົ່ງເສີມເສດຖະກິດຄອບຄົວ (ເສດຖະກິດຄອບຄົວທຳມະດາ, ເສດຖະກິດຄອບຄົວແບບເປີດກວ້າງ) ເພື່ອຍົກລະດັບລາຍໄດ້ ແລະຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໄປພ້ອມກັບການລົງທຶນເປັນໂຄງການ ຕາມບໍລິເວນເຂດແຄວ້ນທີ່ເປັນຈຸດສຸມເພື່ອຊ່ວຍໜູນເສດຖະກິດຄອບຄົວໃຫ້ຂະຫຍາຍຕົວ. ພ້ອມກັນນັ້ນກໍ່ສ້າງການສະສົມເພື່ອມີທຶນຮອນພັດທະນາຢ່າງເປັນເຈົ້າການໃນຂັ້ນຕໍ່ໄປ.

ອ່ານຕໍ່ສະບັບໜ້າ



## ໂຮມຊຸມນຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 22 ມີນານີ້ ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໄດ້ມີພິທີໂຮມຊຸມນຸມສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ (22/3/1955-22/3/2025) ໂດຍມີສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ກຳມະການສູນກາງພັກ, ອະດີດການນຳຂັ້ນສູງຂອງພັກ-ລັດ, ພະນັກງານປະຕິວັດອາວຸໂສ, ການນຳຂັ້ນສູງຈາກພາກສ່ວນຕ່າງໆ, ທູດ-ທູຕານຸທູດຈາກປະເທດເພື່ອນມິດແລະອົງການຈັດຕັ້ງສາກົນ ພ້ອມດ້ວຍຊາວໜຸ່ມ-ເຍົາວະຊົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກ່ອນກ້າວເຂົ້າສູ່ພິທີທາງການ, ຜູ້ເຂົ້າຮ່ວມໄດ້ຮັບຊົມວີດີໂອສາລະຄະດີເລື່ອງ "70 ປີ ພາຍໃຕ້ການນຳພາຂອງພັກ" ເຊິ່ງໃຫ້ຮູ້ເຖິງປະຫວັດແຫ່ງການກຳເນີດ ແລະ ການນຳພາຂອງພັກຕະຫຼອດໄລຍະຜ່ານມາ; ຈາກນັ້ນ, ກໍໄດ້ຮັບຊົມການສະແດງສິລະປະທີ່ເຊີດຊູໃຫ້ເຫັນຜົນງານອັນໃຫຍ່ຫຼວງ ແລະ ສື່ເຖິງຄວາມຊາບຊຶ້ງໃຈຕໍ່ບຸນຄຸນຂອງພັກທີ່ໄດ້ເສຍສະຫຼະທຸກສິ່ງທຸກຢ່າງເພື່ອປະເທດຊາດເພື່ອປະຊາຊົນລາວບັນດາເຜົ່າ. ພາຍຫຼັງສິ້ນສຸດ, ສະຫາຍ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ທັງເປັນຜູ້ປະຈຳການຄະນະຮັບຜິດ ຊອບຊີ້ນຳລະດັບຊາດເພື່ອສະເຫຼີມສະຫຼອງ 3 ວັນປະຫວັດສາດ ໃນນາມຄະນະຈັດຕັ້ງພິທີ ໄດ້ຂຶ້ນເຊີນເຄົາລົບທຸງຊາດ ເພື່ອກ້າວສູ່ພິທີໂຮມຊຸມນຸມຢ່າງເປັນທາງການ ແລະ ໄດ້ກ່າວຈຸດປະສົງຂອງພິທີຄັ້ງນີ້.

ສະຫາຍ ທອງລຸນ ສີສຸລິດ ໄດ້ຂຶ້ນກ່າວສູນທອນພົດ ເຊິ່ງມີເນື້ອໃນບາງຕອນສຳຄັນວ່າ: ມື້ນີ້, ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ຄະນະພັກ ແລະ ປະຊາຊົນຊາວນະຄອນຫຼວງວຽງຈັນ ຕາງໜ້າໃຫ້ທົ່ວພັກ ແລະ ປວງຊົນລາວທັງຊາດ ໄດ້ຮ່ວມກັນຈັດຕັ້ງພິທີໂຮມຊຸມນຸມໃຫຍ່ລະດັບຊາດຂຶ້ນທີ່ນະຄອນຫຼວງວຽງຈັນ, ໝາກຫົວໃຈຂອງປວງຊົນລາວທັງຊາດພ້ອມໆກັບບັນດາແຂວງໃນທົ່ວປະເທດພ້ອມໆກັນໃນເວລາດຽວກັນນີ້ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ ທີ່ເຕັມໄປດ້ວຍບັນຍາກາດອັນເບີກບານມ່ວນຊື່ນ ແລະ ນ້ຳໃຈຟົດຟື້ນປະຕິວັດ. ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍຕາງໜ້າໃຫ້ສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ສູນກາງແນວລາວສ້າງຊາດ ຂໍສົ່ງຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ, ຄວາມສາມັກຄີຮັກແພງອັນສະໜິດສະໜົມ ແລະ ຄຳອວຍພອນໄຊອັນປະເສີດ ໄປຍັງບັນດາສະຫາຍອະດີດການນຳພັກ-ລັດ, ນັກປະຕິວັດອາວຸໂສ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ໃນທົ່ວປະເທດ, ສະມາຊິກພັກ-ພະນັກງານ, ທະຫານ, ຕຳຫຼວດ, ປະຊາຊົນລາວບັນດາເຜົ່າ ແລະ ພີ່ນ້ອງເຊື້ອສາຍລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ການດຳລົງຊີວິດຂອງທຸກຄົນ ມານະໂອກາດນີ້ດ້ວຍ. ໃນພິທີອັນສຳຄັນຍິ່ງນີ້, ພວກເຮົາສຸດທີ່ອາໄລອາວອນ ແລະ ຈົດຈຳລ້ຳລຶກບຸນຄຸນອັນປະເສີດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກ, ຜູ້ນຳພາກໍ່ຕັ້ງຝຶກຝົນຫຼໍ່ຫຼອມ, ຖະນຸຖະໜອມສ້າງພັກເຮົາໃຫ້ເຕີບໃຫຍ່ເຂັ້ມແຂງ, ຜູ້ນຳພາພາລະກິດປະຕິວັດ ແລະ ນຳພາສ້າງຕັ້ງລະບອບປະຊາທິປະໄຕປະຊາຊົນ, ຜູ້ອອກແບບ, ບຸກເບີກ ແລະ ນຳພາພາລະກິດປ່ຽນແປງໃໝ່ຢູ່ປະເທດເຮົາ; ພ້ອມກັນນີ້, ພວກເຮົາກໍມີຄວາມຄິດຄະນຶງຫາ ແລະ ຈົດຈຳລ້ຳລຶກເຖິງວິລະກຳອັນລ້ຳເລີດ, ການເສຍສະຫຼະອັນໃຫຍ່ຫຼວງຂອງບັນດາຜູ້ນຳຮຸ່ນກໍ່ຕັ້ງ ແລະ ຮຸ່ນສືບທອດຂອງພັກ, ພະນັກງານ-ສະມາຊິກພັກ, ນັກຮົບປະຕິວັດ ແລະ ປະຊາຊົນລາວຜູ້ຮັກຊາດ ທີ່ໄດ້ອຸທິດເລືອດເນື້ອ, ເຫື່ອແຮງ ເຂົ້າໃນພາລະກິດປະຕິວັດ, ເພື່ອຄວາມເປັນເອກະລາດແຫ່ງຊາດ, ອິດສະຫຼະພາບ ແລະ ຄວາມສົມບູນພູນສຸກຂອງປະເທດ ແລະ ປະຊາຊົນລາວ ໃນໄລຍະທີ່ຜ່ານມາ. ຂ້າພະເຈົ້າ ຂໍຮຽນເຊີນບັນດາສະຫາຍທີ່ເຂົ້າຮ່ວມພິທີ ທັງຢູ່ທີ່ນີ້ ແລະ ກຳລັງຮ່ວມພິທີດັ່ງກ່າວນີ້ຢູ່ທຸກໆແຫ່ງໃນທົ່ວປະເທດ ລຸກຂຶ້ນກົ້ມຫົວໄວ້ອາໄລເຖິງດວງວິນຍານຂອງບັນດາສະຫາຍຜູ້ທີ່ລ່ວງລັບໄປ.

ຈາກນັ້ນ, ສະຫາຍ ທອງລຸນ ສີສຸລິດ ກໍໄດ້ທວນຄືນມູນເຊື້ອແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງພັກ, ການນຳພາຂອງພັກໃນຕະຫຼອດ 70 ປີຜ່ານມາ. ເພື່ອສືບຕໍ່ເສີມຂະຫຍາຍພາລະກຳປະຫວັດສາດອັນຍິ່ງໃຫຍ່ ແລະ ການສືບຕໍ່ພາລະກິດປະຕິວັດຂອງພັກເຮົາ ໃຫ້ດຳເນີນໄປດ້ວຍຄວາມໜັກແໜ້ນ ແລະ ມີໄຊ, ສະຫາຍເລຂາທິການໃຫຍ່ ໄດ້ຕາງໜ້າສູນກາງພັກ, ການນຳພັກ-ລັດ ຮຽກຮ້ອງມາຍັງບັນດາສະຫາຍຄະນະພັກ-ຄະນະນຳແຕ່ລະຂັ້ນ, ພະນັກງານ-ສະມາຊິກພັກ, ນັກຮົບປະຕິວັດ ຈົ່ງອອກແຮງຖະນຸບຳລຸງ, ປັບປຸງກໍ່ສ້າງພັກ, ຍົກສູງມານະຈິດປະຕິວັດ, ຄວາມສາມາດນຳພາ, ເພີ່ມທະວີຄວາມຮັບຜິດຊອບການເມືອງຂອງທຸກການຈັດຕັ້ງ ແລະ ສະມາຊິກພັກໃຫ້ສູງຂຶ້ນ ທັງບຸກບືນສູ້ຊົນເຮັດສຳເລັດໜ້າທີ່ວຽກງານທີ່ພັກ ແລະ ລັດມອບໝາຍໃຫ້ ສົມກັບຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນ. ຮຽກຮ້ອງມາຍັງປະຊາຊົນລາວບັນດາເຜົ່າ ຈົ່ງອອກແຮງແຂ່ງຂັນກັນເສີມຂະຫຍາຍຈິດໃຈຮັກຊາດ, ປະຕິບັດສິດເປັນເຈົ້າປະເທດຊາດຢ່າງແຂງແຮງ ແລະ ເປັນເຈົ້າການເຂົ້າຮ່ວມຕິດຕາມ, ກວດກາ, ຊ່ວຍເຫຼືອໃຫ້ຄວາມຄິດເຫັນຕໍ່ການເຄື່ອນໄຫວປະຕິບັດໜ້າທີ່ຂອງອົງການຈັດຕັ້ງພັກ-ລັດ ກໍຄືສະມາຊິກພັກ, ພະນັກງານ-ລັດຖະກອນ ຢ່າງປົກກະຕິ; ຊ່ວຍພັກ-ລັດ ເສີມຂະຫຍາຍຈຸດດີ, ດັດແປງ, ແກ້ໄຂຈຸດບົກພ່ອງ ໃຫ້ມີການຫັນປ່ຽນໃໝ່ທີ່ນັບມື້ນັບເຂັ້ມແຂງຂຶ້ນຢ່າງບໍ່ຢຸດຢັ້ງ.

## ລັດຖະບານ...

(ຕໍ່ຈາກໜ້າ 1)

ໃນນິຄົມອຸດສາຫະກຳ ໂດຍທ່ານໄດ້ລົງເລິກ ແລະ ອະທິບາຍຊີ້ແຈງເພີ່ມຕື່ມບັນຫາທີ່ເປັນໃຈກາງຂອງນະໂຍບາຍພິເສດໃຫ້ແກ່ຜູ້ລົງທຶນໃນນິຄົມອຸດສາຫະກຳອຳມະຕະ ເຊິ່ງເປັນໂຄງການພັດທະນານິຄົມອຸດສະຫະກຳຢູ່ເມືອງນາໝໍ້ ແຂວງອຸດົມໄຊ ແລະ ນາເຕີຍ ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ ນັ້ນແມ່ນນະໂຍບາຍທີ່ກ່ຽວພັນກັບການຍົກເວັ້ນອາກອນກຳໄລໃນໄລຍະ 30 ປີ ໃຫ້ແກ່ຜູ້ລົງທຶນໃນນິຄົມອຸດສາຫະກຳດັ່ງກ່າວ ເຊິ່ງເປັນນະໂຍບາຍສູງເມື່ອທຽບໃສ່ການໃຫ້ນະໂຍບາຍດັ່ງກ່າວຢູ່ປະເທດໃນພາກພື້ນອາຊຽນ, ທັງນີ້ ກໍຍ້ອນວ່າ: 1) ປະເທດເຮົາມີຂໍ້ຈຳກັດຫຼາຍດ້ານເມື່ອທຽບກັບປະເທດເພື່ອນບ້ານ ເປັນຕົ້ນ: ທີ່ຕັ້ງພູມສັນຖານຂອງໂຄງການບໍ່ເອື້ອອຳນວຍ; ພື້ນຖານໂຄງລ່າງຍັງບໍ່ໄດ້ຮັບການພັດທະນາ, ຜູ້ພັດທະນານິຄົມຈຳເປັນຕ້ອງໄດ້ລົງທຶນຫຼາຍ. 2) ຕະຫຼາດພາຍໃນມີຈຳກັດ, ຄວາມສະດວກຂອງການລົງທຶນກໍຢູ່ໃນອັນດັບທີ່ຕ່ຳຫຼາຍ (154 ຈາກ 190 ປະເທດ). 3) ປະເທດເຮົາຍັງສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ແຫຼ່ງທຶນມາກະຕຸ້ນເສດຖະກິດຍັງຈຳກັດ, ແຮງງານໜຸ່ມເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດເປັນຈຳນວນຫຼວງຫຼາຍ ເຮັດໃຫ້ຂາດແຄນແຮງງານ, ການລົງທຶນຂອງຕ່າງປະເທດໃນຂົງເຂດອຸດສາຫະກຳປຸງແຕ່ງມີຈຳກັດ ສ່ວນໃຫຍ່ແມ່ນສຸມໃສ່ຂະແໜງພະລັງງານ ແລະ ບໍ່ແຮ່ເທົ່ານັ້ນ; ດັ່ງນັ້ນ, ການຍົກເວັ້ນການເກັບອາກອນກຳໄລດັ່ງກ່າວນີ້ ຈຶ່ງເປັນເຄື່ອງມືທີ່ສຳຄັນຂອງລັດຖະບານເພື່ອດຶງດູດ ແລະ ກະຕຸ້ນການລົງທຶນໃນຂະແໜງອຸດສາຫະກຳປຸງແຕ່ງ, ສ້າງວຽກເຮັດງານທຳ ແລະ ດຶງດູດແຮງງານກັບຄືນປະເທດ, ດຶງເມັດເງິນເຂົ້າປະເທດ ເພື່ອປະກອບສ່ວນສ້າງຄວາມໝັ້ນຄົງ ແລະ ສະຖຽນລະພາບທາງດ້ານການເງິນ ແລະ ເງິນຕາ. 4) ຕ້ອງແຂ່ງຂັນກັບປະເທດອື່ນ ໃນການສົ່ງເສີມ ແລະ ຍາດແຍ່ງການລົງທຶນຕ່າງປະເທດ ເພາະການລົງທຶນຂອງຕ່າງປະເທດໃນອາຊຽນກໍຟື້ນຕົວ, ແຕ່ການລົງທຶນສ່ວນໃຫຍ່ແມ່ນໄຫຼໄປສູ່ປະເທດທີ່ມີເງື່ອນໄຂພາຍໃນດີກວ່າເຊັ່ນ: ສິງກະໂປ, ອິນໂດເນເຊຍ ແລະ ຫວຽດນາມ ເຊິ່ງສາມາດຍາດແຍ່ງໄດ້ຫຼາຍກວ່າໝູ່, ໃນຂະນະທີ່ມາເລເຊຍ, ໄທ ແລະ ຟີລິບປິນ ກໍກຳລັງປັບປຸງນະໂຍບາຍ ແລະ ປັດໄຈພາຍໃນຢ່າງແຂງຂັນ; ສຳລັບປະເທດເຮົາ, ການໃຫ້ນະໂຍບາຍຍົກເວັ້ນອາກອນກຳໄລສູງສຸດ 30 ປີ ໃນເຂດນິຄົມອຸດສາຫະກຳອຳມະຕະ ແມ່ນນະໂຍບາຍສູງສຸດກວ່າປະເທດອື່ນກໍຈິງ, ແຕ່ກໍເພື່ອທົດແທນຈຸດດ້ອຍທີ່ເຮົາຍັງບໍ່ສາມາດແຂ່ງຂັນກັບປະເທດເພື່ອນບ້ານອາຊຽນໄດ້. 5) ຄວນຈັບເອົາໂອກາດຂອງການເຄື່ອນຍ້າຍການລົງທຶນຕ່າງປະເທດ ໃນສະພາບການປ່ຽນແປງທາງດ້ານພູມສາດການເມືອງ ແລະ ເສດຖະກິດ ທີ່ກຳລັງນັບມື້ນັບຮຸນແຮງ ແລະ ຄາດຄະເນໄດ້ຍາກ ເຊິ່ງເຮັດໃຫ້ນັກລົງທຶນຢູ່ຫຼາຍປະເທດໄດ້ເຄື່ອນຍ້າຍ ຫຼື ກຳລັງພິຈາລະນາຈະເຄື່ອນຍ້າຍຖານການຜະລິດຂອງຕົນ ຈາກປະເທດໜຶ່ງໄປສູ່ພາກພື້ນ ຫຼື ປະເທດອື່ນ. 6) ບໍລິສັດອຳມະຕະ ເປັນບໍລິສັດມະຫາຊົນ, ມີຜົນສຳເລັດສູງໃນການພັດທະນານິຄົມອຸດສາຫະກຳຢູ່ປະເທດໄທ ແລະ ຫວຽດນາມ. 7) ອຳນາດການປົກຄອງແຂວງອຸດົມໄຊ ບ່ອນທີ່ໂຄງການດັ່ງກ່າວຕັ້ງຢູ່ ໃຫ້ການສະໜັບສະໜູນຢ່າງແຂງແຮງ ແລະ ມີຄວາມມຸ່ງຫວັງຢາກໃຫ້ໂຄງການນີ້ເກີດ.

ທ່ານ ສະເຫຼີມໄຊ ກົມມະສິດ ໃຫ້ຮູ້ອີກວ່າ: ລັດຖະບານໄດ້ກຳນົດເງື່ອນໄຂສະເພາະສຳລັບຜູ້ພັດທະນາ ແລະ ຜູ້ຈະມາລົງທຶນໃນນິຄົມອຸດສາຫະກຳອຳມະຕະເຊິ່ງຈະໄດ້ຮັບນະໂຍບາຍພິເສດຄື:

1. ລົງທຶນໃນເຂດທີ່ໄດ້ເຊັນສັນຍາກັບລັດຖະບານຄື: ຢູ່ເມືອງນາໝໍ້ແຂວງອຸດົມໄຊ ແລະ ເຂດນາເຕີຍແຂວງຫຼວງນ້ຳທາ.

2. ລົງທຶນໃນ 4 ກິດຈະການສົ່ງເສີມພິເສດທີ່ລັດຖະບານກຳນົດຄື: 1) ອຸດສາຫະກຳປຸງແຕ່ງກະສິກຳ ທີ່ນຳໃຊ້ວັດຖຸດິບຈາກພາຍໃນເປັນຫຼັກ ເພື່ອສົ່ງອອກ, 2) ອຸດສາຫະກຳຜະລິດແຜງພະລັງງານແສງຕາເວັນ ແລະ ພະລັງງານທົດແທນ, 3) ອຸດສາຫະກຳຜະລິດລົດຍົນ ແລະ ອາໄຫຼ່, 4) ອຸດສາຫະກຳຜະລິດອຸປະກອນໄຟຟ້າ ແລະ ເອເລັກໂຕຣນິກ.

3. ລົງທຶນພາຍໃນ 7 ປີ ນັບແຕ່ມື້ດຳລັດວ່າດ້ວຍນິຄົມອຸດສາຫະກຳອຳມະຕະມີຜົນສັກສິດເປັນຕົ້ນໄປ.

4. ຜູ້ພັດທະນາຕ້ອງປະຕິບັດພັນທະ 14 ຂໍ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງດຳລັດສະບັບລວມແລ້ວ ຍັງຕ້ອງປະຕິບັດພັນທະເພີ່ມຕື່ມ 10 ຂໍ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງດຳລັດນິຄົມອຸດສາຫະກຳອຳມະຕະ; ສຳລັບຜູ້ລົງທຶນ, ນອກຈາກຕ້ອງປະຕິບັດພັນທະ 11 ຂໍ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງດຳລັດສະບັບລວມແລ້ວ ຍັງຕ້ອງປະຕິບັດພັນທະເພີ່ມຕື່ມ 7 ຂໍ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງດຳລັດນິຄົມອຸດສາຫະກຳອຳມະຕະຕື່ມອີກ.

5. ນະໂຍບາຍຍົກເວັ້ນອາກອນກຳໄລ 30 ປີ ແມ່ນໃຫ້ສະເພາະຜູ້ລົງທຶນໃນນິຄົມ (ຜູ້ມາສ້າງຕັ້ງໂຮງຈັກ-ໂຮງງານ), ສ່ວນຜູ້ພັດທະນາແມ່ນໄດ້ຮັບນະໂຍບາຍສົ່ງເສີມຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນກຳນົດ ແລະ ຕ້ອງດຶງດູດ ແລະ ລະດົມທຶນເຂົ້າມາເຂດນິຄົມອຸດສາຫະກຳ 4.5-5 ຕື້ໂດລາສະຫະລັດ ໃນໄລຍະ 5-7 ປີ ພາຍຫຼັງເລີ່ມຕົ້ນການພັດທະນາ.

6. ໂຄງການດັ່ງກ່າວ ຈະຕ້ອງໄດ້ມີການສະຫຼຸບລາຍງານ ແລະ ຖືກປະເມີນການພັດທະນາໂຄງການ ແລະ ການປະຕິບັດພັນທະຂອງຜູ້ພັດທະນາ ແລະ ຜູ້ລົງທຶນໃນທຸກໆປີ ໃນໄລຍະ 7 ປີ ໂດຍຄະນະທີ່ປະກອບດ້ວຍຜູ້ຕາງໜ້າຈາກສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ກະຊວງ, ຂະແໜງການທີ່ກ່ຽວຂ້ອງຢູ່ສູນກາງ ແລະ ພະແນກການຂອງແຂວງ ເພື່ອຮັບປະກັນໂຄງການໄດ້ຮັບການພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ດຳລັດວ່າດ້ວຍນິຄົມອຸດສາຫະກຳໄດ້ກຳນົດ; ຫຼັງຈາກນັ້ນ, ລັດຖະບານ ແລະ ສະພາ ສາມາດພິຈາລະນາວ່າຈະມີການເຈລະຈາປັບປຸງຄືແນວໃດ.

**(ນາງ ອາລິນ ສຸພົມມະປະດິດ)**






# ການກະທຳ ສຳຄັນກວ່າຄຳເວົ້າ

# ດົ້ນກົບເມກ

ຄວາມຄິດເລີ່ມຕົ້ນເປັນຈຸດສຳຄັນໃນການຈະນຳພາສ້າງອັນໃດໃຫ້ເກີດຂຶ້ນ ເຊັ່ນ: ນະໂຍບາຍ-ແຜນງານ ທີ່ເປັນຄວາມຄິດຢາກເຮັດໃຫ້ສຳເລັດ, ແຕ່ເມື່ອເວົ້າອອກມາກໍພຽງເພື່ອເປັນການອະທິບາຍໃຫ້ຄົນອ້ອມຂ້າງໄດ້ເຂົ້າເຖິງຂັ້ນຕອນ ແລະ ແຜນການທີ່ຈະເຮັດ ເຊິ່ງຖ້າວ່າເວົ້າອອກໄປແລ້ວເຮັດໄດ້ຕາມທີ່ເວົ້າ ຍິ່ງເຮັດໃຫ້ຄົນຟັງເກີດຄວາມເຊື່ອສັດທາໃນໂຕຜູ້ເວົ້າ, ແຕ່ຖ້າມີແຕ່ເວົ້າ ເຮັດບໍ່ໄດ້ ກໍຂາດຄວາມເຊື່ອຖືໄປໃນໂຕ.

ຫຼັກການພັດທະນາຂັ້ນຕົ້ນສຳຄັນກວ່າສິ່ງອື່ນໃດ ເຂົາຈຶ່ງເນັ້ນໄປທີ່ການພັດທະນາຕົນ ເພາະວ່າຄົນຈະໄປສອນຄົນອື່ນ ຕ້ອງມີການປະພຶດຕົນໃຫ້ເປັນແບບຢ່າງກ່ອນສະເໝີ ເຂົາຈຶ່ງຈະເຮັດຕາມ ຕົວຢ່າງ: ພະພຸດທະເຈົ້າສາດສະດາຂອງສາສະໜາພຸດ ຈະເຮັດເປັນແບບຢ່າງແກ່ສາວົກ ເມື່ອພະອົງເວົ້າແນວໃດ ກໍເຮັດແນວນັ້ນ ເຊິ່ງທຽບໃສ່ສະພາບການໃນປັດຈຸບັນ ຖ້າວ່າຫົວໜ້າຈະສອນລູກນ້ອງໃຫ້ປະຕິບັດຕາມ ຫຼື ພໍ່ແມ່ຈະສອນລູກຫຼານໃນທາງດີ ແນ່ນອນຜູ້ຈະສອນເຂົາກໍຕ້ອງປະພຶດເປັນແບບຢ່າງກ່ອນ ບໍ່ດັ່ງນັ້ນຈະເຂົ້າທຳນອງມືຖືສາກປາກຖືສິນ.

ການກະທຳຈຶ່ງສຳຄັນກວ່າຄຳເວົ້າຂອງຄົນເຮົາ ເພາະຜູ້ຕາມຈະເບິ່ງຫົວໜ້າບໍ່ພຽງແຕ່ຄຳເວົ້າ ແຕ່ຢູ່ທີ່ການປະພຶດ ວ່າໄດ້ເຮັດຕາມທີ່ໄດ້ເວົ້າ ຫຼື ບໍ່? ຜູ້ຂຽນໄດ້ອ່ານຂໍ້ມູນຈາກທີ່ມາຫຼາຍແຫ່ງ ກໍມຸ່ງສະຫຼຸບໄວ້ວ່າ: ຄົນທີ່ຈະໄປພັດທະນາຄົນອື່ນ ກ່ອນອື່ນໝົດຕ້ອງປະພຶດຕົນເອງເປັນແບບຢ່າງກ່ອນ ຄືສ້າງຮູບປະທຳໃຫ້ຄົນເຫັນກ່ອນ ເຊັ່ນດຽວກັບການວາງທິດສະດີ ແລະ ຮູ້ນຳພາຈັດຕັ້ງປະຕິບັດຕົວຈິງ ຖືວ່າເປັນຜູ້ຈິງໃຈຢາກເຮັດແທ້ຈິງ.

ການສ້າງຕົນເອງເປັນແບບຢ່າງ ກໍຈຳເປັນຕ້ອງຮູ້ໂຕເອງ-ສຳຫຼວດເບິ່ງພຶດຕິກຳຕົນເອງວ່າອັນໃດດີ-ບົກຜ່ອງອັນໃດເຮັດໄດ້ຕາມທີ່ເວົ້າໄວ້ ເຊິ່ງຄົນລາວເຮົາມັກເວົ້າກັນຕິດປາກວ່າ ຜູ້ເຮັດຕາມທີ່ເວົ້າຄືຜູ້ມີສັດຈະ ທັງກາຍ ແລະ ໃຈ (ສະເໜີແລກປ່ຽນ).




# ວິທີເຮັດວຽກ

**ພາກທີ 7**

**ບັນຫາພະນັກງານ**

**ງ. ສ້າງພະນັກງານ:** ເມື່ອເຂົາເຈົ້າຜິດພາດໃຫ້ໃຊ້ວິທີ ທີ່ເໝາະສົມຊີ້ແຈງຊ່ວຍເຫຼືອເຂົາເຈົ້າແກ້ໄຂດັດແປງ.

ຖ້າຄວາມຜິດພາດນັ້ນຫາກບໍ່ໃຫຍ່ຫຼວງແທ້ ກໍບໍ່ຄວນຟ້າວເວົ້າໃສ່ເຂົາເຈົ້າວ່າ: "ເຂົາເຈົ້າມີລັດທິສວຍໂອກາດ" ຫຼື ຕັກເຕືອນດ້ວຍຄວາມຮ້າຍ ຫຼື ໄລ່ອອກຈາກພັກ; ເພາະວ່າເຮັດແນວນັ້ນແມ່ນບໍ່ຖືກ.

**ຈ) ຊ່ວຍເຫຼືອ:** ຕ້ອງໃຫ້ເຂົາເຈົ້າມີເງື່ອນໄຂ ແລະ ມີຊີວິດການເປັນຢູ່ພຽງພໍເພື່ອເຮັດວຽກ. ເວລາເຂົາເຈົ້າປ່ວຍກໍຕ້ອງມີຢຸກຢາໃຫ້ເຂົາເຈົ້າກິນ ຫຼື ສັກ, ຕ້ອງຊ່ວຍເຂົາເຈົ້າແກ້ໄຂເລື່ອງຄອບຄົວຂອງເຂົາເຈົ້າຕາມແຕ່ສະພາບການຈະອຳນວຍ. ເລື່ອງດັ່ງກ່າວນັ້ນມັນພົວພັນເຖິງຈິດໃຈຂອງພະນັກງານ ແລະ ພົວພັນເຖິງຄວາມສາມັກຄີຮັກແພງກັນຢູ່ໃນພັກ.

**5. ຂໍ້ໃຫຍ່ບາງປະການກ່ຽວກັບນະໂຍບາຍພະນັກງານ:**

ພັກຂອງພວກເຮົາມີສະມາຊິກຈຳນວນຫຼາຍໝື່ນຫຼາຍແສນຄົນ ເຊິ່ງສ່ວນຫຼາຍເປັນພະນັກງານເຮັດວຽກໃຫ້ແກ່ພັກຢູ່ດຽວນີ້ ໃນຈຳນວນສະມາຊິກ ແລະ ພະນັກງານທີ່ມີທັງທຸກຊົນຊັ້ນ, ຊົນຊາດ, ທຸກສາສະໜາ, ທຸກເພດໄວ. ຄົນເຫຼົ່ານີ້ມີລະບອບສັງຄົມຕ່າງກັນ, ລະດັບຄວາມຮູ້ຕ່າງກັນ ແລະ ຄວາມຄິດສ່ວນຕົວກໍ່ຕ່າງກັນ.

ເປັນແນວນັ້ນພວກເຮົາຈະເຮັດແນວໃດ ຈຶ່ງຈະປະພຶດຕົວຕໍ່ຄົນພວກນີ້ໃຫ້ຖືກໃຈໝົດທຸກຄົນໄດ້? ນັ້ນເປັນບັນຫາທີ່ຫຍຸ້ງຍາກ ແລະ ສຳຄັນຫຼາຍ. ດັ່ງນັ້ນ ພວກເຮົາຈຶ່ງຕ້ອງເອົາໃຈໃສ່ບາງເລື່ອງທີ່ຈະເວົ້າຕໍ່ລົງລຸ່ມນີ້:

ອ່ານຕໍ່ສະບັບໜ້າ...



## ສູນທອນພົດ...

(ຕໍ່ຈາກໜ້າ 1)

ຫຼອງ 3 ວັນປະຫວັດສາດຂອງພັກ ແລະ ຂອງຊາດ: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ, ວັນສ້າງຕັ້ງ ສປປລາວ ຄົບຮອບ 50 ປີ, ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ຢ່າງເປັນຂະບວນຟົດຟື້ນທົ່ວປະເທດ.

ປີ 2025, ເປັນປີມ້ອນທ້າຍຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງສະພາແຫ່ງຊາດ ຈະໄດ້ເອົາໃຈໃສ່ເພີ່ມທະວີການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ດ້ວຍຄວາມຮັບຜິດຊອບສູງ ແລະ ໃຫ້ປາກົດຜົນສຳເລັດຢ່າງຈົບງາມ ເຖິງວ່າໃນທ່າມກາງສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ພວມມີການຜັນແປໄປຢ່າງສັບສົນ, ວ່ອງໄວ, ສະຫຼັບຊັບຊ້ອນ, ຄາດຄະເນໄດ້ຍາກ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ບັນ ດາປະເທດໃນໂລກ ລວມທັງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂອງພວກເຮົາ, ບວກກັບຄວາມຫຍຸ້ງ ຍາກທາງດ້ານເສດຖະກິດ-ການເງິນ ທີ່ແກ່ຍາວມາຫຼາຍປີ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຳລົງຊີວິດຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ.

ໃນເງື່ອນໄຂດັ່ງກ່າວ, ດ້ວຍຄວາມພະຍາຍາມ, ເອົາໃຈໃສ່ນຳພາ-ຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ, ການເຮັດວຽກຮ່ວມກັນຢ່າງໃກ້ຊິດໃນການແກ້ໄຂບັນຫາທີ່ເຄັ່ງຮ້ອນຕ່າງໆ ລະຫວ່າງສະພາແຫ່ງຊາດ, ລັດຖະບານ ແລະ ດ້ວຍຄວາມສູ້ຊົນບຸກບືນຂອງທົ່ວລະບົບການເມືອງ ໂດຍສະເພາະແມ່ນສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທຸກຂັ້ນ ບວກໃສ່ຄວາມສາມັກຄີເປັນຈິດໜຶ່ງໃຈດຽວຂອງປະຊາຊົນບັນດາເຜົ່າ ແລະ ການສູ້ຊົນຂອງທຸກພາກທຸລະກິດ ໄດ້ເຮັດໃຫ້ບັນດາມາດຕະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຈິງຈັງກວ່າເກົ່າ ເຊິ່ງໄດ້ຮັບຜົນສຳເລັດຫຼາຍດ້ານ, ເຮັດໃຫ້ເສດຖະກິດຂອງປະເທດສືບຕໍ່ມີການຂະຫຍາຍຕົວໃນທາງບວກ, ບັນດາຄາດໝາຍທາງດ້ານເສດຖະກິດ-ສັງຄົມ ສາມາດບັນລຸໄດ້ຕາມແຜນເປັນສ່ວນໃຫຍ່ ແລະ ຄາດໝາຍຈຳນວນໜຶ່ງ ສາມາດປະຕິບັດໄດ້ລື່ນແຜນ ເຊິ່ງເປັນການປະກອບສ່ວນທີ່ສຳຄັນໃຫ້ປະເທດ ຊາດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຍັງສືບຕໍ່ມີທ່າອຽງຂະຫຍາຍຕົວຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການຍົກສູງດີຂຶ້ນເປັນກ້າວໆ, ບົດບາດຂອງປະເທດເຮົາໄດ້ຮັບການຍົກສູງພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງນີ້ ດ້ານໜຶ່ງກໍເປັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ອີກດ້ານໜຶ່ງ ກໍເປັນຄວາມພະຍາຍາມ ແລະ ຄວາມເອົາໃຈໃສ່ຂອງສະພາແຫ່ງຊາດ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍປ່ຽນແປງໃໝ່ຂອງພັກ ໃຫ້ເປັນອັນລະອຽດເຂົ້າໃສ່ເນື້ອໃນຂອງລັດຖະທຳມະນູນ, ກົດໝາຍ ເພື່ອສືບຕໍ່ສ້າງລັດທີ່ປົກ ຄອງດ້ວຍກົດໝາຍສູ່ບາດກ້າວໃໝ່ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ມີປະສິດທິພາບ, ປະສິດທິຜົນສູງຂຶ້ນເລື້ອຍໆ.

ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາລັດຖະທຳມະນູນ ສະບັບປັບປຸງປີ 2025;

2. ພິຈາລະນາ ແລະ ຮັບຮອງເອົາການປັບປຸງກົດໝາຍຈຳນວນ 2 ສະບັບ ຄື: (1) ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, (2) ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ;

3. ຄົ້ນຄວ້ານະໂຍບາຍໃຫ້ແກ່ຜູ້ລົງທຶນໃນນິຄົມອຸດສາຫະກຳຈຳນວນໜຶ່ງ;

4. ພິຈາລະນາຄຳສະເໜີຂອງທ່ານນາຍົກລັດຖະມົນຕີກ່ຽວກັບການປັບປຸງກົງຈັກຂອງລັດຖະບານ.

ວາລະຂອງກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງຫຼາຍບັນຫາທີ່ສຳຄັນ, ຈຳເປັນ ແລະ ຮີບດ່ວນຂອງປະເທດຊາດ. ສະນັ້ນ, ເພື່ອເຮັດໃຫ້ການພິຈາລະນາຮັບ ຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດທີ່ມີຄວາມສຳຄັນຄືດັ່ງກ່າວ ໃຫ້ມີຄຸນນະພາບ, ມີປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງມີຄວາມສາມັກຄີເປັນປຶກແຜນ, ປະສານສົມທົບ, ໃຫ້ການຮ່ວມມື, ສະໜັບສະໜູນ ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້ ແລະ ຂໍຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິ ປະໄຕ, ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ເຊີດຊູຄວາມຮັບ ຜິດຊອບການເມືອງຂອງຕົນ, ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າເນື້ອໃນຢ່າງເລິກເຊິ່ງ, ປະກອບຄຳເຫັນຕໍ່ທຸກບັນຫາຕ່າງໆຢ່າງຖີ່ຖ້ວນ, ສ້າງສັນ, ຮັດກຸມ, ພາວະວິໄສ, ມີເຫດມີຜົນ, ແທດຕົວຈິງ ບົນພື້ນຖານແນວທາງປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ, ຕາມລັດຖະທຳມະນູນ, ກົດໝາຍຂອງລັດ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ພ້ອມທັງຊອກຫາວິທີການ, ມາດຕະການທີ່ສອດຄ່ອງ ເພື່ອແກ້ໄຂບັນດາບັນຫາຮີບດ່ວນ ແລະ ເຄັ່ງຮ້ອນຂອງສັງ ຄົມພວກເຮົາໃນປັດຈຸບັນ; ພ້ອມກັນນັ້ນ, ກໍສ້າງຄວາມເປັນເອກະພາບສູງຕໍ່ເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອສາມາດຮັບຮອງ ແລະ ນຳໄປຈັດຕັ້ງປະຕິບັດຢ່າງມີຜົນສັກສິດ.



**ການປັບປຸງ...**
(ຕໍ່ຈາກໜ້າ 1)

ໂຍງເສດຖະກິດກັບພາກພື້ນແລະ ສາກົນແນໃສ່ສ້າງພື້ນຖານທາງ ດ້ານກົດໝາຍ ກໍຄືນິຕິກຳທີ່ຈະ ວາງອອກໃນຕໍ່ໜ້າ ໃຫ້ຮັບປະ ກັນແນວທາງການເມືອງຂອງພັກ, ການຄຸ້ມຄອງ-ບໍລິຫານລັດໃນ ໄລຍະໃໝ່;2)ປັບປຸງບາງໝວດ, ບາງມາດຕາ ເພື່ອຮັບປະກັນ ຫຼື ຮອງຮັບແນວທາງການເມືອງ ຂອງພັກ ແລະ ແນວທາງການ ຈັດຕັ້ງ, ການຄຸ້ມຄອງ-ບໍລິຫານ ລັດໃນໄລຍະໃໝ່ກໍຄືແນວທາງ ປ່ຽນແປງໃໝ່ໃນຊຸມປີຕໍ່ໜ້າ ໂດຍສະເພາະໃນສະໄໝທີ XII ຂອງພັກຫາກບໍ່ແມ່ນປັບປຸງທັງ ໝົດເນື້ອໃນຂອງລັດຖະທຳມະ ນູນ; 3) ມີເນື້ອໃນສອດຄ່ອງກັບ ບັນດາເນື້ອໃນຂອງໂຄງການການ ເມືອງຂອງພັກ ສະບັບທີ 3, ຮ່າງ ລາຍງານການເມືອງທີ່ຈະສະເໜີ ຕໍ່ກອງປະຊຸມໃຫຍ່ ສະໄໝທີ XII ຂອງພັກ, ມະຕິ 05/ຄບສພ, ມະຕິ 04/ກມສພ ແລະ ຄຳສັ່ງ 173/ຄລສພ. ທັງໝົດທີ່ກ່າວ ມານີ້, ແມ່ນເຫດຜົນ, ຄວາມຈຳ ເປັນ ແລະ ຈິດໃຈຊີ້ນຳທີ່ສຳຄັນຕໍ່ ການປັບປຸງລັດຖະທຳມະນູນຄັ້ງນີ້.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ພາຍຫຼັງ ລັດຖະທຳມະນູນສະບັບປັບປຸງ ປີ 2025 ຖືກຮັບຮອງ ແລະ ປະ ກາດໃຊ້ ຈະເປັນບ່ອນອີງໃນການ ເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງລະບົບອຳນາດແຫ່ງ ລັດ ກໍຄືລະບົບການເມືອງປະຊາ ທິປະໄຕປະຊາຊົນຂອງປະເທດ ເຮົາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ໂດຍສະເພາະການ ປັບປຸງຂັ້ນການປົກຄອງທ້ອງຖິ່ນ ໃຫ້ສອດຄ່ອງຕາມມະຕິ 05/ ຄບສພ ແລະແທດເໝາະກັບສະ ພາບການຂະຫຍາຍຕົວທາງດ້ານ ເສດຖະກິດ-ສັງຄົມໃນໄລຍະ ໃໝ່; ເປັນພື້ນຖານທີ່ສຳຄັນ ແລະ ຈຳເປັນໃຫ້ແກ່ການສືບຕໍ່ ສ້າງ, ປັບປຸງກົດໝາຍ ແລະ ນິ ຕິກຳໃຕ້ກົດໝາຍ ໃຫ້ເປັນລະ ບົບ, ຄົບຊຸດ ແລະ ສອດຄ່ອງ ກັບໜ້າທີ່ການເມືອງຂອງພັກ ໃນໄລຍະໃໝ່, ແນໃສ່ສ້າງລັດ ປະຊາທິປະໄຕປະຊາຊົນ ໃຫ້ເປັນ ລັດທີ່ປົກຄອງດ້ວຍກົດໝາຍ ສູ່ບາດກ້າວໃໝ່; ເປັນບ່ອນອີງ ທີ່ສຳຄັນໃຫ້ແກ່ການໂຄສະນາ ເຜີຍແຜ່, ສຶກສາອົບຮົມ ເພື່ອ ສ້າງສະຕິເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍໃນ ທົ່ວສັງຄົມ ໃຫ້ສູງຂຶ້ນ; ຮັບປະ ກັນການເສີມຂະຫຍາຍແລະປະ ຕິບັດສິດເປັນເຈົ້າປະເທດຊາດ, ສິດ ແລະ ປະຊາທິປະໄຕຂອງປະ ຊາຊົນລາວບັນດາເຜົ່າ ທັງເປັນ ການຍົກສູງຖານະບົດບາດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນເວທີສາກົນ ແລະ ພາກພື້ນ.

---

**ອາດ ກະວີລາວ**

# ອວຍພອນແດ່ພັກ ປປລາວ ຄົບຮອບ 70 ປີ

**# ຫຼານເຈົ້ານ້ອຍ**

❊ ດວງເດືອນດູເດັ່ນຟ້າ ນະພາຮຸ່ງເຮືອງໃສ
ມີໝູ່ດາລາ ແວດວົງໂຮມຫຸ້ມ
ປຸ້ມລຸມກັນເຍືອງຟ້າ ເວຫາງາມສະຫງ່າ
ປະຈັກຕາເດັ່ນແຈ້ງ ແຍງແລ້ວເບື່ອບໍ່ເປັນ

❊ ຍາມໃດຟ້າມືດຄຶ້ມ ມອນເມກມາບັງ
ມອງບໍ່ເຫັນເດືອນດາວ ສ່ອງແສງບົນຟ້າ
ຫາກເຮົາບິນເໜືອເຝື້ອ ເດືອນດາວຍັງດູເດັ່ນ
ຊ່ວຍກັນສາດສ່ອງໃຫ້ ເມືອງຟ້າສະຫງ່າງາມ ທ່ານເອີຍ!

❊ ພັກນັ້ນປຸນປຽບດ້ວຍ ເດືອນເດັ່ນບົນນະພາ
ດາລາຄືປະຊາຊົນ ຮ່ວມໂຮມຮຸມຫຸ້ມ
ປຸ້ມລຸມກັນເສີມສ້າງ ເມືອງລາວໃຫ້ໃສສ່ອງ
ແຈ້ງດັ່ງດຽວບ່ານຟ້າ ຈະເລີນເຫຼື້ອມເຮື່ອເຮືອງ

❊ ເຖິງແມ່ນຕົກບ່ອນບັ້ນ ມືວມືດສູນແສງ
ພັກກັບປະຊາກໍຍັງ ຮ່ວມແຮງແຂງສູ້
ພັກນຳພາຊູຊ້ອານ ຊາວປະຊາຕາມໄຕ່
ຊ່ວຍເຍືອງແຍງສ່ອງໃຫ້ ເມືອງບ້ານເດັ່ນງາມ

❊ ວັນນີ້ຄ້າຍວັນເກີດເຈົ້າ ຄົບຮອບ 70 ປີ
ປະຊາຊົນລາວເຮົາ ຮ່ວມອວຍພອນໃຫ້
ຜູ້ນຳພັກ-ລັດຈົ່ງໄດ້ ຍືນຍົງຂະໜົງແກ່ນ
ເປັນແສງເດືອນສ່ອງໃຫ້ ປະຊາເຊື້ອໄດ້ໄຕ່ຕາມ ຊອບແລ້ວ!

❊ ຂໍໃຫ້ພັກຈົ່ງໄດ້ ຊີ້ສ່ອງແນວທາງ
ນຳພາ ສປປລາວ ສູ່ຄວາມຈະເລີນກ້າວ
ນຳປະເທດຊາດໄດ້ ຈະເລີນງາມນາມຮຸ່ງ
ພຸ່ງປະກາຍເດັ່ນພົ້ນ ລາວກ້າວອັດທາບາ ຫັ້ນທ້ອນ!

---



## ໜັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ຊົມເຊີຍ 22 ມີນາ** ວັນສ້າງຕັ້ງພັກປະຊາຊົນປະ ຕິວັດລາວ ກ້າວສູ່ **70 ປີ** ຮຽນລ່ອງໄລເວທີນີ້ ປະນົມມືນົບ ນ້ອມ ຍໍຍື່ນພອນໄຊ ໄປຍັງການນຳພັກ ທີ່ວລາວເໜືອ- ກາງ-ໃຕ້ ເປັນຫອບໄພໃສແຈ້ງ ແຍງທາງປະຊາໄຕ່ ໃຫ້ລາວ ເຮືອງຮຸ່ງກ້າວ ໃສເຫຼື້ອມກວ່າແຕ່ຫຼັງ **ຊອບແລ້ວ!**

❊ **ຊົມເຊີຍ**ຜົນສຳເລັດ**ກອງປະຊຸມສະໄໝວິສາ ມັນ ເທື່ອທີ 2** ຂອງສະພາແຫ່ງຊາດ **ຊຸດທີ IX** ທີ່ໄດ້ສຳເລັດ ເສັດສິ້ນໃນວັນທີ **20 ມີນານີ້** ຊິຂໍຖາມຊາວເບື້ອງ ທ້ອງຖິ່ນ ຮາກຖານ ກ່ອນເນີ! ເປັນຈັ່ງໃດ່ເດບໍ່ ຢູ່ສະບາຍເບົາເບື້ອ ຫຼືວ່າເຫຼືອແຮງຫ້າງ ເອກະສານປຶກໃຫຍ່ ກຽມໃສ່ການປັບ ແກ້ ຈັງການປົກຄອງໃໝ່ໃຊ້ ຕາມເບື້ອງລັດຖະທຳມະນູນ **ນັ້ນແລ້ວ!**

## ຊອບຍິ້ມ

**# ແອ່ບຕຸ້ງ**

### ເລື່ອງ: ຄືບໍ່ເອົ້າໄວກວ່ານີ້

ສອງຜົວເມຍໄດ້ໄປນັ່ງກິນບຸບເຟ່ຢູ່ຮ້ານແຫ່ງໜຶ່ງ ໃນມື້ວັນ ເກີດຂອງຜູ້ເປັນເມຍ, ເຮັດໃຫ້ຜູ້ເປັນເມຍຕື່ນຕັນໃຈແຮງ ທີ່ຜົວ ໃສ່ໃຈຄວາມຮູ້ສຶກຄືເກົ່າ; ແຕ່ຢູ່ໆ ກໍມີຜູ້ສາວຄືພາຄົນໜຶ່ງຍ່າງມາ ແລ້ວເອົ້າວ່າ:

"ອ້າຍໆ ນ້ອງຄືພາ"

ພໍເມຍໄດ້ຍິນກໍກະຟືດກະຟາດ ລຸກຂຶ້ນຝາມືຕົບກົກຫູຜູ້ເປັນ ຜົວຢ່າງແຮງ ແລ້ວຍ່າງໜີ

ຍິງຄົນນັ້ນຕົກໃຈຈຶ່ງເອົ້າຕໍ່ວ່າ:

"ອ້າຍມອດຢາສູບໄດ້ບໍ່, ນ້ອງຢ້ານຊິເປັນອັນຕະລາຍຕໍ່ລູກ ໃນທ້ອງ"

ຜູ້ເປັນຜົວຄິດໃນໃຈ "ແລ້ວເປັນຫຍັງມຶງຄືບໍ່ເອົ້າໄວກວ່ານີ້"



## ຄະຕິເຕືອນໃຈ

**#ດອກຫຍ້າ**

"ຢ່າຕີຕົນໄປກ່ອນໄຂ້"

ລັດຖະສະພາຕ່າງປະເທດ

# Serbia ຜ່ານກົດໝາຍຫຼຸດຄ່າຮຽນໃນມະຫາວິທະຍາໄລ ຕອບສະໜອງຄໍາຮຽກຮ້ອງຂອງກຸ່ມນັກສຶກສາ



(AFP) - ວັນທີ 6 ມີນາຜ່ານມາ, ຝ່າຍນິຕິບັນຍັດແຊັກບີຜ່ານຮ່າງກົດໝາຍການສຶກສາ ທີ່ຈະຫຼຸດຄ່າຮຽນໃນລະດັບມະຫາວິທະຍາໄລ ເຊິ່ງສອດຄ່ອງກັບຂໍ້ຮຽກຮ້ອງທີ່ສໍາຄັນຂອງກຸ່ມຜູ້ປະທ້ວງ ທີ່ນໍາໂດຍນັກສຶກສາ.

ການລົງມະຕິມີຂຶ້ນ 2 ວັນ ຫຼັງຈາກສະມາຊິກສະພາແຫ່ງຊາດຝ່າຍຄ້ານ ໄດ້ຈູດບັ້ງໄຟດອກແລະຖິ້ມກະປ໋ອງຄວັນໃນສະພາແຫ່ງຊາດ ເພື່ອສະແດງການສະໜັບສະໜູນຂະບວນການປະທ້ວງ.

ຮ່າງກົດໝາຍດັ່ງກ່າວນີ້ຈະຊ່ວຍຫຼຸດຄ່າຮຽນໃນລະດັບມະຫາວິທະຍາໄລເຖິງ 50% ເຊິ່ງເປັນບາດກ້າວຫຼ້າສຸດ ໃນຊຸດຂໍ້ສະເໜີຍິນຍອມຂອງລັດຖະບານເພື່ອຢຸດຕິຄວາມບໍ່ສະຫງົບທີ່ເກີດຈາກການມີຜູ້ເສຍຊີວິດ 15 ຄົນ ເມື່ອຫຼັງຄາຂອງສະຖານີລົດໄຟແຫ່ງໜຶ່ງໃນເມືອງໂນວິຊາດ(Novi Sad)ພັງລົງເມື່ອເດືອນພະຈິກປີຜ່ານມາ, ເຊິ່ງເປັນກໍລະນີກະຕຸ້ນຄວາມໂກດແຄ້ນມາດົນນານ ກ່ຽວກັບບັນຫາສໍ້ລາດບັງຫຼວງ ແລະ ການຂາດການກວດກາໂຄງການກໍ່ສ້າງ ແລະ ການພັດທະນາ.

ການປະທ້ວງປະຈໍາວັນນໍາໂດຍກຸ່ມນັກສຶກສາ ເພີ່ມຄວາມກົດດັນຕໍ່ລັດຖະບານຂອງປະທານາທິບໍດີ ອະເລັກຊານດາຣ໌ ວູຊິຊ (Aleksandar Vucic) ສົ່ງຜົນໃຫ້ເຈົ້າໜ້າທີ່ລະດັບສູງຫຼາຍຄົນ ລວມທັງນາຍົກລັດຖະມົນຕີ ລາອອກຈາກຕໍາແໜ່ງ.

ເຖິງແມ່ນ ວູຊິຊ ແລະ ເຈົ້າໜ້າທີ່ລັດຄົນອື່ນ ກ່າວຫາວ່າຜູ້ປະທ້ວງໄດ້ຮັບການສະໜັບສະໜູນຈາກມະຫາອໍານາດຕ່າງຊາດ, ແຕ່ພວກເຂົາກໍຮຽກຮ້ອງໃຫ້ມີການເຈລະຈາ ແລະ ພະຍາຍາມຕອບສະໜອງຂໍ້ຮຽກຮ້ອງຫຼາຍຢ່າງຂອງຜູ້ຈັດຕັ້ງການປະທ້ວງ, ບໍ່ວ່າຈະເປັນການເຜີຍແຜ່ເອກະສານບາງສະບັບກ່ຽວກັບການສ້ອມແປງສະຖານີລົດໄຟ Novi Sad, ການອະໄພໂທດໃຫ້ແກ່ຜູ້ປະທ້ວງທີ່ຖືກຈັບໃນການຊຸມນຸມ, ມາດຕະການປັບປຸງການສຶກສາຊັ້ນສູງ ແລະການດໍາເນີນຄະດີອາຍາຕໍ່ຜູ້ຕ້ອງສົງໄສທີ່ຖືກກ່າວຫາວ່າໂຈມຕີພວກປະທ້ວງ.

# ຜູ້ນໍາມຽນມາ ເປີດເຜີຍເວລາເລືອກຕັ້ງ "ໄວສຸດພາຍໃນເດືອນມັງກອນ 2026"

*(AFP)-ພົອ. ມິນອອງ ຫຼ່າຍ (Min Aung Hlaing) ກ່າວວ່າ ການເລືອກຕັ້ງທົ່ວໄປຄັ້ງໃໝ່ຂອງມຽນມາຈະຈັດຂຶ້ນ "ຢ່າງໄວທີ່ສຸດບໍ່ເກີນເດືອນມັງກອນປີ 2026".*



ສໍານັກຂ່າວຕ່າງປະເທດລາຍງານຈາກນະຄອນຫຼວງເນປີດໍ ເມື່ອວັນທີ 8 ມີນານີ້ວ່າ: ໜັງສືພິມ The Global New Light of Myanmar ຂອງມຽນມາ ໄດ້ພິມເຜີຍແຜ່ບົດສໍາພາດຂອງ ພົອ. ມິນ ອອງ ຫຼ່າຍ ຜູ້ບັນຊາການທະຫານສູງສຸດແລະນາຍົກລັດຖະມົນຕີມຽນມາ ທີ່ກໍາລັງຢ້ຽມຢາມເບລາຣຸດຊີວ່າ "ມຽນມາ ຈະຈັດການເລືອກຕັ້ງທົ່ວໄປຢ່າງເສລີ ແລະ ຍຸຕິທໍາ". ຜູ້ນໍາມຽນມາກ່າວອີກວ່າ: ຢ່າງໜ້ອຍມີ 53 ພັກການເມືອງ ໄດ້ຍື່ນເອກະສານເພື່ອສະແດງຄວາມຕັ້ງໃຈທີ່ຈະສົ່ງຜູ້ສະໝັກເຂົ້າແຂ່ງຂັນໃນການເລືອກຕັ້ງຄັ້ງໃໝ່ ເຊິ່ງຈະເກີດຂຶ້ນຢ່າງໄວທີ່ສຸດໃນເດືອນທັນວາ 2025 ຫຼື ພາຍໃນເດືອນມັງກອນ 2026; ຄະນະກໍາມະການການເລືອກຕັ້ງຂອງມຽນມາ ຈະໄດ້ເຊື້ອເຊີນບັນດາຜູ້ສັງເກດການສາກົນ ໃຫ້ເຂົ້າຮ່ວມສັງເກດການການເລືອກຕັ້ງຄັ້ງນີ້ ລວມທັງຄະນະຜູ້ແທນຂອງເບລາຣຸດຊີ.

ສະພາປ້ອງກັນປະເທດ ແລະຄວາມໝັ້ນຄົງແຫ່ງຊາດຂອງມຽນມາ ໄດ້ມີມະຕິເມື່ອເດືອນມັງກອນທີ່ຜ່ານມາຂະຫຍາຍໄລຍະເວລາການບັງຄັບໃຊ້ຄໍາສັ່ງສະຖານະການສຸກເສີນໃນທົ່ວປະເທດ ເລື່ອນເວລາໄປອີກຢ່າງໜ້ອຍ 6 ເດືອນ ເນື່ອງຈາກຍັງມີຫຼາຍເລື່ອງຮີບດ່ວນ ແລະ ຈໍາເປັນທີ່ລັດຖະບານຕ້ອງແກ້ໄຂຢ່າງຮີບດ່ວນ ແລະບັນລຸໄດ້ຕາມແຜນການເພື່ອຟື້ນຟູສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງຊາດ ໃຫ້ຢູ່ໃນລະດັບທີ່ເໝາະສົມສໍາລັບຈັດການເລືອກຕັ້ງທົ່ວໄປ.

ທັງນີ້, ລັດຖະທໍາມະນູນມຽນມາກໍານົດວ່າ: ການເລືອກຕັ້ງບໍ່ສາມາດຈັດຂຶ້ນໄດ້ພາຍໃຕ້ສະຖານະການສຸກເສີນ, ເຊິ່ງໝາຍຄວາມວ່າ ການເລືອກຕັ້ງທີ່ລັດຖະບານໄດ້ໃຫ້ຄໍາໝັ້ນສັນຍາຈະຈັດຂຶ້ນພາຍໃນປີ 2025 ຈະບໍ່ສາມາດຈັດຂຶ້ນໄດ້ພາຍໃນທີກເດືອນຕົ້ນປີນີ້.

# ສິງກະໂປ ປັບປຸງເຂດເລືອກຕັ້ງກ່ອນການເລືອກຕັ້ງທົ່ວໄປ



(Xinhua) - ສິງກະໂປໄດ້ປັບປຸງເຂດເລືອກຕັ້ງສໍາລັບການເລືອກຕັ້ງທົ່ວໄປທີ່ຈະມາເຖິງ, ໂດຍການປ່ຽນແປງດັ່ງກ່າວຕົ້ນຕໍເກີດຈາກການປ່ຽນແປງຂອງຈໍານວນຜູ້ມີສິດເລືອກຕັ້ງເນື່ອງຈາກການເຄື່ອນຍ້າຍຂອງປະຊາກອນ ແລະ ການພັດທະນາທີ່ຢູ່ອາໄສໃໝ່.

ການເລືອກຕັ້ງທົ່ວໄປໃນປີ 2025 ຈະມີ 33 ເຂດເລືອກຕັ້ງ ໂດຍມີສະມາຊິກລັດຖະສະພາ 97 ຄົນ, ເພີ່ມຂຶ້ນຈາກ 93 ຄົນ ໃນ 31 ເຂດເລືອກຕັ້ງໃນການເລືອກຕັ້ງປີ 2020, ອີງຕາມການລາຍງານຂອງຄະນະກໍາມະການກວດກາຄືນເຂດເລືອກຕັ້ງ ເມື່ອວັນອັງຄານທີ 11 ມີນາຜ່ານມາ.

ມາຮອດວັນທີ 1 ກຸມພານີ້, ສິງກະໂປ ມີຜູ້ລົງທະບຽນເລືອກຕັ້ງແລ້ວ 2,753,226 ຄົນ, ເພີ່ມຂຶ້ນ 101,791 ຄົນ ຈາກປີ 2020; ແນວໃດກໍຕາມ, ລາຍງານກ່າວວ່າການຂະຫຍາຍຕົວນັ້ນ "ບໍ່ໄດ້ແຈກຢາຍຢ່າງເທົ່າທຽມກັນ" ໃນເຂດເລືອກຕັ້ງຕ່າງໆເນື່ອງຈາກວ່າບາງພື້ນທີ່ມີການຂະຫຍາຍຕົວສູງຂຶ້ນຍ້ອນການປ່ຽນແປງຂອງປະຊາກອນແລະການພັດທະນາທີ່ຢູ່ອາໄສໃໝ່.

ການເລືອກຕັ້ງທົ່ວໄປຈະຕ້ອງຈັດຂຶ້ນພາຍໃນເດືອນພະຈິກນີ້, ແຕ່ຍັງບໍ່ທັນໄດ້ປະກາດວັນທີເລືອກຕັ້ງທີ່ແນ່ນອນເທື່ອ.

# Greenland ຈັດການເລືອກຕັ້ງລັດຖະສະພາ




(Xinhua) - ກຣີນແລນ ເຊິ່ງເປັນເຂດປົກຄອງຕົນເອງໃນລາຊະອານາຈັກດານມາກ ໄດ້ຈັດການເລືອກຕັ້ງສະມາຊິກລັດຖະສະພາ ເມື່ອວັນອັງຄານທີ 11 ມີນາຜ່ານມາ, ຜູ້ມີສິດເລືອກຕັ້ງຫຼາຍກວ່າ 40,420 ຄົນ ໄດ້ໄປປ່ອນບັດຢູ່ 72 ໜ່ວຍເລືອກຕັ້ງໃນທົ່ວເຂດ ເຊິ່ງເປີດເວລາ 9:00 ໂມງແລະປິດເວລາ 20:00 ໂມງ ຕາມເວລາທ້ອງຖິ່ນ; ສະມາຊິກລັດຖະສະພາ 31 ຄົນ ອາຍຸການ 4 ປີ ຈະຖືກເລືອກຈາກຜູ້ສະໝັກ 213 ຄົນ ທີ່ເປັນຕົວແທນຂອງຫົກພັກການເມືອງ.

ອີງປະກອບຂອງລັດຖະບານປົກຄອງຕົນເອງຊຸດໃໝ່ ຈະໄດ້ຮັບການກໍານົດໂດຍອີງໃສ່ຜົນຂອງການເລືອກຕັ້ງ. ມູເຕ ເອເກເດ (Mute Egede) ນາຍົກລັດຖະມົນຕີກຣີນແລນ ແລະຫົວໜ້າພັກຊຸມຊົນຂອງປະຊາຊົນ (Inuit Ataqatigiit - IA) ໄດ້ກ່າວເຖິງການເລືອກຕັ້ງຄັ້ງນີ້ວ່າ ເປັນ "ຊ່ວງເວລາຕັດສິນຊີ້ຂາດ" ສໍາລັບອະນາຄົດຂອງເກາະ.

ນາຍົກລັດຖະມົນຕີດານມາກ ເມດເຕ ເຟຣເດີຣິກເຊນ (Mette Frederiksen) ໄດ້ສົ່ງຄໍາອວຍພອນຂອງນາງຜ່ານສື່ສັງຄົມວ່າ: ຂ້າພະເຈົ້າຂໍໃຫ້ທຸກຄົນໃນກຣີນແລນ ມີວັນເລືອກຕັ້ງທີ່ດີ.

ໃນການໃຫ້ສໍາພາດທີ່ເຜີຍແຜ່ເມື່ອວັນຈັນທີ 10 ມີນາ ກັບ DR ສະຖານີວິທະຍຸກະຈາຍສຽງຂອງດານມາກ, ເອເກເດ ກ່າວວ່າສິ່ງທີ່ສໍາຄັນທີ່ສຸດທັນທີຫຼັງຈາກການເລືອກຕັ້ງຫາກເຂົາຍັງຢູ່ໃນອໍານາດ ຄືການຢືນຢັນອໍານາດອະທິປະໄຕຂອງກຣີນແລນ.

"ກຣີນແລນ ເປັນຂອງຊາວກຣີນແລນ, ບໍ່ວ່າປະທານາທິບໍດີສະຫະລັດອາເມລິກາ ຈະອ້າງຫຼາຍຄັ້ງກໍຕາມວ່າເຂົາຕ້ອງການຄວບຄຸມກຣີນແລນ" ເອເກເດ ກ່າວຢ່າງແຂງຂັນ.

ຕັ້ງແຕ່ຕົ້ນປີນີ້, ປະທານາທິບໍດີ ໂດນັນ ທຣໍາ ຂອງສະຫະລັດ ໄດ້ກ່າວຊໍ້າແລ້ວຊໍ້າອີກວ່າເຂົາຕ້ອງການຍຶດຄອງກຣີນແລນ, ແມ່ນແຕ່ສະເໜີຄວາມເປັນໄປໄດ້ທີ່ຈະໃຊ້ກໍາລັງ.

# ສານລັດຖະທໍາມະນູນບຸນກາລີ ປະກາດວ່າການເລືອກຕັ້ງສະມາຊິກສະພາແຫ່ງຊາດ 16 ຄົນ ແມ່ນຜິດກົດໝາຍ




(Xinhua)-ວັນພະຫັດທີ 13 ມີນາຜ່ານມາ, ສານລັດຖະທໍາມະນູນຂອງບຸນກາລີ ໄດ້ປະກາດວ່າ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ 16 ຄົນຈາກທັງໝົດ 240 ທີ່ນັ່ງ ທີ່ຈັດຂຶ້ນເມື່ອວັນທີ 27 ຕຸລາ 2024 ແມ່ນຜິດກົດໝາຍ.

ໃນທ້າຍເດືອນກຸມພາ, ສານລັດຖະທໍາມະນູນສັ່ງໃຫ້ຄະນະກໍາມະການການເລືອກຕັ້ງສູນກາງ (Central Election Commission-CEC) ນັບຄະແນນສຽງຈາກການເລືອກຕັ້ງສະພາແຫ່ງຊາດຄືນໃໝ່ ຫຼັງຈາກການສືບສວນສອບສວນການສໍ້ໂກງການເລືອກຕັ້ງທີ່ເລີ່ມຕົ້ນຂຶ້ນເມື່ອເດືອນພະຈິກປີຜ່ານມາ.

ບັນດາຜູ້ຊ່ຽວຊານໄດ້ກວດກາບັດລົງຄະແນນ ຈາກໜ່ວຍເລືອກຕັ້ງ 1,768 ຈາກທັງໝົດ 12,920 ໜ່ວຍປ່ອນບັດຂອງປະເທດ, ພົບວ່າມີຄວາມຄາດເຄື່ອນ 46.75% ຂອງກໍລະນີທັງໝົດເຊິ່ງສານລັດຖະທໍາມະນູນ ໄດ້ພົບເຫັນຈໍານວນຄະແນນສຽງທີ່ຈັດສັນໃຫ້ລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ມີການປ່ຽນແປງ ແລະ ຍັງມີຄວາມບໍ່ສອດຄ່ອງກັນອີກ.

ສານລັດຖະທໍາມະນູນໄດ້ສັ່ງໃຫ້ CEC ພິຈາລະນາຜົນການເລືອກຕັ້ງ ລວມທັງການແຈກຢາຍອໍານາດ ແລະ ລາຍຊື່ສະມາຊິກສະພາແຫ່ງຊາດທີ່ໄດ້ຮັບການເລືອກຕັ້ງ ຕາມຄໍາຕັດສິນຂອງສານ.

ເຫັນໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ການກະທຳທີ່ທຳລາຍຄວາມ ຍຸຕິທຳ ລະຫວ່າງຍິງ–ຊາຍ

ເພື່ອໃຫ້ເຂົ້າກັບບັນຍາກາດວັນແມ່ຍິງສາກົນ (8 ມີນາ) ປະຈຳປີນີ້, ຜູ້ຂຽນໄດ້ຂຸດຄົ້ນເອົາເຫດການທີ່ພົວພັນກັບສິດ ແລະ ຜົນປະໂຫຍດຂອງແມ່ຍິງໃນຕ່າງປະເທດ ມາເວົ້າໃຫ້ຟັງພໍຫອມປາກຫອມຄໍ ໂດຍເລີ່ມຈາກເຫດການທີ່ເກີດຂຶ້ນຢູ່ປະເທດຍີ່ປຸ່ນ ເມື່ອປະມານ 7 ປີຍ້ອນຫຼັງ. ເລື່ອງມີຢູ່ວ່າ ທາງການຂອງປະເທດນີ້ ໄດ້ເຮັດການສຳຫຼວດຄັ້ງໃຫຍ່ໃນທົ່ວປະເທດ ເພື່ອຊອກຂໍ້ມູນກ່ຽວກັບບັນຫາການຈຳແນກເພດຍິງໃນຂະແໜງການສຶກສາວິຊາແພດ ເນື່ອງຈາກໄດ້ມີການສັງເກດເຫັນສະພາບຫຼຸດໂຕນດ້ານຈຳນວນລະຫວ່າງນັກສຶກສາເພດຊາຍ ທີ່ມີຈຳນວນຫຼາຍກວ່າເພດຍິງໃນຂະແໜງນີ້; ໃນປີທີ່ເລີ່ມມີການສຳຫຼວດນັ້ນ, ນັກສຶກສາເພດຊາຍທີ່ສາມາດສອບຜ່ານເຂົ້າຮຽນຕໍ່ໃນມະຫາວິທະຍາໄລການແພດກວມເອົາ 11.25% ຂອງຈຳນວນເພດຊາຍທີ່ເຂົ້າສອບເສັງ, ສ່ວນນັກສຶກສາເພດຍິງທີ່ສອບຜ່ານນັ້ນ ມີພຽງ 9.55% ຂອງເພດຍິງທັງໝົດທີ່ເຂົ້າສອບເສັງ. ຈາກສະພາບຜິດປົກກະຕິດັ່ງກ່າວ, ທາງກະຊວງສຶກສາຍີ່ປຸ່ນ ຈຶ່ງໄດ້ລົງມືສຳຫຼວດຕົວຈິງເປັນເວລາ 6 ປີເຕັມໆໃນມະຫາວິທະຍາໄລ ແລະ ສະຖາບັນການສຶກສາດ້ານການແພດ 81 ແຫ່ງໃນທົ່ວປະເທດ, ແລ້ວຂໍ້ມູນທີ່ເກັບກ່ຽວມາໄດ້ ກໍຖືກເປີດເຜີຍໃນໄຕມາດທີ 3 ຂອງປີ 2018 ເຊິ່ງໄດ້ໃຫ້ລາຍລະອຽດວ່າ ສະພາບຫຼຸດໂຕນດ້ານຈຳນວນນັກສຶກສາເພດຊາຍ ແລະ ເພດຍິງ ທີ່ສອບຜ່ານເພື່ອສຶກສາຕໍ່ໃນຂະແໜງການແພດນັ້ນ ແມ່ນເກີດມາຈາກການຈຳແນກແທ້ໆ ບໍ່ແມ່ນຍ້ອນວ່ານັກສຶກສາເພດຍິງບໍ່ມີຄວາມສາມາດ ຈຶ່ງສອບຜ່ານໄດ້ຈຳນວນໜ້ອຍ; ຂໍ້ມູນທີ່ໜ້າອັບອາຍນັ້ນ ໃຫ້ຮູ້ວ່າ: ຄະນະກຳມະການຮັບຜິດຊອບການສອບເສັງ ມີເຈດຕະນາຕັດຄະແນນຂອງຜູ້ສອບເສັງເພດຍິງອອກ ເພື່ອໃຫ້ຫຼຸດຄະແນນຂອງນັກສຶກສາເພດຊາຍ. ຂໍ້ມູນນີ້ໄດ້ພົບເຫັນກ່ອນໝູ່ຢູ່ມະຫາວິທະຍາໄລການແພດນະຄອນຫຼວງໂຕກຽວ, ສາເຫດທີ່ຕ້ອງຕັດຫຼຸດຄະແນນຂອງຜູ້ສອບເສັງເພດຍິງ ກໍຍ້ອນມີຄວາມເຊື່ອວ່າ ພະນັກງານແພດທີ່ເປັນເພດຊາຍນັ້ນ ມີຄວາມແຂງແຮງ ທົນທານ ສາມາດເຮັດວຽກໄດ້ຫຼາຍຊົ່ວໂມງກວ່າພະນັກງານແພດເພດຍິງ, ຄວາມແຂງແຮງ ແລະ ທົນທານມີຄວາມຈຳເປັນສຳລັບອາຊີບແພດ ເພາະຕ້ອງໄດ້ຕິດຕາມກັນເປັນທຸກເວລາ; ນອກຈາກນັ້ນ, ພະນັກງານແພດເພດຍິງ ຍັງມີທ່າອຽງປະລະອາຊີບ ເມື່ອພວກເຂົາສ້າງຄອບຄົວ ແລະ ມີພາລະລ້ຽງລູກ. ຂໍ້ມູນທີ່ຄົ້ນພົບນີ້ ໄດ້ສ້າງຄວາມບໍ່ພໍໃຈຢ່າງກວ້າງຂວາງໃນສັງຄົມຍີ່ປຸ່ນເວລານັ້ນເພາະເຫັນວ່າເປັນການຈຳແນກແທ້ໆ; ນອກຈາກນັ້ນ,ຍັງມີການເປີດເຜີຍຂໍ້ມູນອື່ນໆອີກວ່າ ໂດຍລວມແລ້ວຜູ້ສອບເສັງເພດຍິງນັ້ນ ໄດ້ຄະແນນດີກວ່າເພດຊາຍອີກຊ້ຳ ບໍ່ວ່າຈະເປັນວິຊາວິທະຍາສາດ ກໍຄືວິຊາສັງຄົມ ທີ່ມີຄວາມຈຳເປັນສຳລັບອາຊີບພະນັກງານແພດ. ຂ່າວໄດ້ມ້ວນທ້າຍວ່າ ມະຫາວິທະຍາໄລອື່ນໆທີ່ຖືກກວດສອບນັ້ນ ຕ່າງກໍພາກັນປະຕິເສດສຽງແຂງວ່າ ບໍ່ມີການຈຳແນກລະຫວ່າງຜູ້ເຂົ້າສອບເສັງເພດຊາຍແລະເພດຍິງແຕ່ປະການໃດເລີຍ, ຂໍ້ອ້າງນີ້ທາງກະຊວງສຶກສາຍີ່ປຸ່ນບໍ່ປົງໃຈເຊື່ອງ່າຍໆ ຈຶ່ງຕ້ອງໄດ້ສືບຕໍ່ຊອກຂໍ້ມູນໃຫ້ເຖິງກົກເຖິງຮາກ, ຖ້າພົບເຫັນກໍລະນີຈຳແນກຄືຢູ່ມະຫາວິທະຍາໄລການແພດໂຕກຽວແລ້ວ ກໍຈະມີການປະຕິບັດວິໄນຢ່າງເໝາະສົມຕໍ່ຜູ້ກະທຳຜິດ.

ອີກເລື່ອງໜຶ່ງທີ່ກາຍເປັນຂ່າວດັງທີ່ເກີດຂຶ້ນໃນໄລຍະດຽວກັບຂ່າວຂ້າງເທິງ ນັ້ນກໍຄືຂ່າວທີ່ບອກວ່າແອັບ (APP) ຊ່ວຍຊອກເມຍໃນປະເທດອິນໂດເນເຊຍ ຖືກໂຈມຕີຢ່າງໜັກວ່າເປັນໂຕການຊັກຈູງໃຫ້ຜູ້ຊາຍມີເມຍຫຼາຍຄົນ. ແອັບທີ່ວ່ານັ້ນມີຊື່ວ່າ "ໄອໂຢໂປລີກາມີ" ແລະ ໄດ້ເປີດໃຫ້ບໍລິການໃນຕົ້ນເດືອນເມສາ2017, ນັບແຕ່ມື້ເປີດໃຫ້ບໍລິການຮອດເດືອນຕຸລາປີດຽວກັນນັ້ນ ກໍມີຜູ້ສະໝັກເຂົ້າເປັນສະມາຊິກຈຳນວນ 56,000 ຄົນ; ແຕ່ໃນທີ່ສຸດກໍໄປບໍ່ລອດ ເພາະຄະນະກຳມາທິການແຫ່ງຊາດ ເພື່ອປົກປ້ອງສິດທິຂອງແມ່ຍິງ ອອກມາປະນາມວ່າ ແອັບນີ້ສົ່ງເສີມໃຫ້ຜູ້ຊາຍເອົາເມຍຫຼາຍຄົນ ເຊິ່ງເປັນການທຳລາຍສະຖາບັນຄອບຄົວ, ທຳລາຍທາງດ້ານຈິດໃຈຕໍ່ເພດຍິງເຊິ່ງຈະນຳໄປສູ່ການໃຊ້ຄວາມຮຸນແຮງໃນຄອບຄົວ ກໍຄືການຢ່າຮ້າງ. ສ່ວນເຈົ້າຂອງແອັບນັ້ນກໍອອກມາຕອບວ່າເຂົາຕ້ອງການພຽງເພື່ອໃຫ້ບັນດາແມ່ຍິງໂສດອາຍຸແກ່ໆມີໂອກາດໄດ້ຜົວ, ບໍ່ຊັ້ນພວກເຂົາກໍຈະຄ້າງໂຄກ; ແຕ່ເຫດຜົນນີ້ກໍສູ້ກະແສຕ້ານທານບໍ່ໄດ້ ກໍເລີຍຕ້ອງໄດ້ເລີກໃຫ້ບໍລິການ (ຂ່າວນີ້ແກະມາຈາກໜັງສືພິມ The Nation ສະບັບວັນທີ 4 ຕຸລາ 2017).

ທະນາຄານພັດທະນາລາວ
LDB Bank




# ເກຍກັບຫຼັງ

*#ບ່າວກະບື*

ພົງໄຊຊື້ລົດເກັງໂຕໂຢຕາຄັນຈິກຊອງ, ເຂົາຕົກລົງໃຈຂັບລົດຄັນດັ່ງກ່າວ ຈາກວຽງຈັນບ່ອນເຂົາອາໄສຢູ່ ລົງໄປສະຫວັນນະເຂດ ເພື່ອພົບເພື່ອນຂອງເຂົາຊື່ຈຳປາ, ເຂົາໃຊ້ເວລາຂັບຫົກຊົ່ວໂມງກໍເຖິງສະຫວັນນະເຂດ; ຫຼັງຈາກຢູ່ຢ້ຽມຢາມເປັນເວລາສອງ-ສາມວັນ, ເຂົາກໍຕັດສິນໃຈກັບຄືນວຽງຈັນ, ເຂົາໂທບອກເມຍວ່າເຂົາຈະຮອດເຮືອນໃນຕອນແລງມື້ນັ້ນ ແຕ່...ເຂົາພັດກັບບໍ່ຮອດວຽງຈັນໃນແລງວັນນັ້ນ ແລະ ມື້ຕໍ່ມາກໍຍັງບໍ່ທັນຮອດ. ສຸດທ້າຍ, ເຂົາກັບຮອດເຮືອນໃນມື້ທີສາມ, ບາງເມຍທີ່ມີອາການອຸກອັ່ງແລ່ນໄປຕ້ອນຮັບ, ກອດເຂົາ ແລະ ຖາມວ່າ: "ມີຫຍັງເກີດຂຶ້ນກັບອ້າຍ?" ພົງໄຊ ຕອບເມຍວ່າ:

"ພວກຜະລິດລົດໂຕໂຢຕານີ້ຈັ່ງແມ່ນບ້າ! ພວກເຂົາປະກອບເກຍເຖິງຫ້າເກຍເພື່ອຂັບໄປໜ້າ-ແຕ່ສຳລັບກັບຫຼັງ ພັດມີຕາຍແຕ່ເກຍດຽວຊື່ໆ.

# Reverse Gear

*#BAOKBU*

Phongsay bought a brand new TOYOTA car and decided to drive down from Vientiane where he lived to Savannakhet to meet his friend, Champa. He reached Savannakhet in six hours, After spending a few days there, he decided to return, and called up his wife to expect him in the evening, But he didn't reach Bientiane that evening and not even the next day, When he finally arrived home on the third day, his distraught wife ran out, hugged him, and asked "What became of you?" Phongsay replied:

"These TOYOTA makers are crazy. They made five gears to go forward, but only one gear to go backward."

ຕາມພາສາ ກາຕູນ



ວູດຊີ້ເຫຍື້ອກາງບ້ານ ສ້າງຄວັນພິດຕໍ່ຄົນ

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊີ້ນຳວຽກງານທີ່ປຶກສາ**
ທ່ານ ສີສົມ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ